# ກົດໝາຍອາຍາ

ເລກທີ 29/ສປສ ລົງວັນທີ 23/12/89 (ໄດ້ຖືກລົງຄະແນນສຽງຮັບຮອງເອົາ ຢ່າງເປັນເອກະສັນ ໃນກອງປະຊຸມສະໄໝ ສາມັນຄົບຄະ ນະເທື່ອທີສອງຂອງສະພາປະຊາຊົນສູງສຸດ (ຊຸດທີ 2) ໃນວັນທີ 23 ພະ ຈິກ 1989 ເວລາ 15 ໂມງ 00 ແລະ ປະກາດໃຊ້ຕາມດຳລັດຂອງ ປະທານປະເທດ ສປປລ. ເລກທີ 04 ວັນທີ 9 ມັງກອນ 1990).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນສູງສຸດ ເລກທີ 29/ສປສ

ວັນທີ 23 ທັນວາ 1989

# ກົດໝາຍອາຍາ

## ພາກທົ່ວໄປ

## ໝວດທີ I

## ວ່າດ້ວຍ ຫລັກການລວມ

**ມາດຕາ 1. ໜ້າທີ່ຂອງກົດໝາຍອາຍາ**

ກົດໝາຍອາຍາ ມີໜ້າທີ່ປົກປັກຮັກສາລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກຳມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ສິດແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານແລະກັນການກະທຳຜິດ ແລະ ສຶກສາອົບຮົມພົນລະເມືອງທຸກຄົນໃຫ້ມີຄວາມຕື່ນຕົວເຄົາລົບກົດໝາຍ.

ເພື່ອປະຕິບັດໜ້າທີ່ດັ່ງກ່າວ ກົດໝາຍສະບັບນີ້ ໄດ້ກຳນົດວ່າ ການກະທຳອັນໃດທີ່ເປັນອັນຕະລາຍຕໍ່ສັງຄົມ ແມ່ນເປັນການກະທຳຜິດທາງອາຍາ ແລ້ວຈຶ່ງໄດ້ກຳນົດໂທດໃສ່ຜູ້ກະທຳຜິດ.

**ມາດຕາ 2. ພື້ນຖານຂອງຄວາມຮັບຜິດຊອບທາງອາຍາ**

ບຸກຄົນຜູ້ໃດຈະມີຄວາມຮັບຜິດຊອບທາງອາຍາ ແລະ ຈະຖືກລົງໂທດທາງອາຍາໄດ້ກໍຕໍ່ເມື່ອບຸກຄົນຜູ້ນັ້ນຫາກມີການກະທຳໂດຍເຈດຕະນາ ຫລື ດ້ວຍຄວາມບໍ່ລະມັດລະວັງ ທີ່ເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ໃນເມື່ອມີຄຳຕັດສິນຂອງສານເທົ່ານັ້ນ.

## ໝວດທີ II

## ວ່າດ້ວຍຂອບເຂດຂອງການນຳໃຊ້ກົດໝາຍອາຍາ.

**ມາດຕາ 3. ການນຳໃຊ້ກົດໝາຍອາຍາໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກົດໝາຍອາຍາສະບັບນີ້ ມີຜົນບັງຄັບໃຊ້ໃນທົ່ວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ບຸກຄົນຜູ້ໃດຫາກໄດ້ກະທຳຜິດທາງອາຍາຢູ່ໃນດິນແດນ ສາທາລະນະລັດ ປະຊາທິປະໄຕ

ປະຊາຊົນລາວ.ກໍຈະໄດ້ຮັບຜິດຊອບຕໍ່ກົດໝາຍອາຍາ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຜູ້ຕາງໜ້າທາງການທູດ ຫລື ບຸກຄົນທີ່ໄດ້ຮັບອະພິສິດທາງການທູດຕາມສັນຍາລະຫ່ວາງຊາດຊຶ່ງໄດ້ກະທຳຜິດໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຈະໄດ້ຮັບການແກ້ໄຂທາງການທູດ.

**ມາດຕາ 4. ການນຳໃຊ້ກົດໝາຍອາຍານອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ພົນລະເມືອງລາວຜູ້ທີ່ໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຈະໄດ້ຮັບຜິດຊອບທາງອາຍາ ຖ້າວ່າການກະທຳດັ່ງກ່າວຫາກໄດ້ກຳນົດໄວ້ໃນກົດໝາຍອາຍາຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄົນຕ່າງດ້າວ ແລະ ບຸກຄົນທີ່ບໍ່ມີສັນຊາດທີ່ຢູ່ ຫລື ອາໄສຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫາກໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຈະໄດ້ຮັບຜິດຊອບທາງອາຍາເຊັ່ນດຽວກັນ.

ຄົນຕ່າງປະເທດທີ່ໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະໄດ້ຮັບຜິດຊອບທາງອາຍາຕໍ່ກົດໝາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນກໍລະນີທີ່ໄດ້ກຳນົດໄວ້ໃນສັນຍາ ລະຫວ່າງຊາດ.

**ມາດຕາ 5. ການນຳໃຊ້ກົດໝາຍອາຍາໃນກາລະເວລາ**

ກົດໝາຍສະບັບນີ້ນຳອອກປະຕິບັດນັບແຕ່ວັນທີ່ກົດໝາຍໄດ້ຖືກປະກາດໃຊ້ເປັນຕົນໄປ.

ກົດໝາຍໃໝ່ທີ່ໄດ້ກຳນົດການລົງໂທດເບົາກວ່າ ຫລື ໄດ້ລົບລ້າງການກະທຳຜິດທາງອາຍາທີ່ກົດໝາຍເກົ່າໄດ້ກຳນົດໄວ້ນັ້ນຈະມີຜົນສັກສິດຍ້ອນຫລັງ.

ກົດໝາຍໃໝ່ທີ່ໄດ້ກຳນົດການກະທຳຜິດໃໝ່ ຫລື ການລົງ ໂທດໜັກກວ່າທີ່ກົດໝາຍເກົ່າໄດ້ກຳນົດໄວ້ຈະບໍ່ມີຜົນສັກສິດຍ້ອນຫລັງ.

## ໝວດທີ III
## ວ່າດ້ວຍການກະທຳຜິດ ແລະ ຜູ້ກະທຳຜິດ

**ມາດຕາ 6. ນິຍາມການກະທຳຜິດ**

ທຸກການກະທຳ ຫລື ທຸກການເມີນເສີຍທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຕໍ່ກຳມະສິດຂອງລັດຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸກຂະພາບ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງບົ່ງໄວ້ໃນກົດໝາຍອາຍາ ຈະຖືວ່າເປັນການກະທຳຜິດທາງອາຍາ.

ທຸກການກະທຳ ຫລື ການເມີນເສີຍທີ່ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນແຕ່ໄດ້ກໍ່ຄວາມເສັຽຫາຍພຽງເລັກໜ້ອຍແກ່ສັງຄົມ ຈະບໍ່ຖືວ່າເປັນການກະທຳຜິດທາງອາຍາ.

**ມາດຕາ 7 . ສະຖານການກະທຳຜິດ**

ການກະທຳຜິດ ແບ່ງອອກເປັນສາມສະຖານ:

- ລະຫຸໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕຳນິວິຈານຕໍ່ໜ້າມະຫາຊົນ, ໂທດປັບໃຫມແຕ່ 5.000ກີບລົງມາ ຖ້າວ່າໂທດດັ່ງກ່າວເປັນໂທດຕົ້ນຕໍ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 26 ຂອງກົດຫມາຍສະບັບນີ້;
- ໂທສານຸໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳ ນົດໂທດດັດສ້າງໂດຍບໍ່ຕັດອິດສະລະພາບ, ໂທດປັບໃຫມແຕ່ 5.000ກີບຂຶ້ນໄປ ຖ້າວ່າໂທດດັ່ງກ່າວເປັນໂທດຕົ້ນຕໍ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 26 ຂອງກົດຫມາຍສະບັບນີ້, ໂທດຕັດອິດສະລະພາບແຕ່ສາມເດືອນ ຫາ ສິບປີ;
- ຄະຣຸໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ ແຕ່ ຫ້າປີຂຶ້ນໄປຮອດປະຫານຊີວິດ.

**ມາດຕາ 8. ການກະທຳຜິດໂດຍເຈດຕະນາ**

ການກະທຳຜິດໂດຍເຈດຕະນາແມ່ນການກະທຳ ຫລື ການເມີນເສີຍ ຊຶ່ງຜູ້ກະທຳຜິດຮູ້ວ່າການກະທຳ ຫລື ການເມີນເສີຍຂອງຕົນນັ້ນເປັນອັນຕະລາຍຕໍ່ສັງຄົມ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນຂອງການກະທຳ ຫລື ການເມີນເສີຍແຕ່ຈົງໃຈເຮັດ ຫລື ປະປ່ອຍໃຫ້ມັນເກີດຂຶ້ນ.

**ມາດຕາ 9. ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ**

ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ ແມ່ນການກະທຳ ຫລື ການເມີນເສີຍ ຊຶ່ງຜູ້ກະທຳຜິດຄາດຄະເນໄດ້ວ່າ ການກະທຳ ຫລື ການເມີນເສີຍຂອງຕົນນັ້ນອາດມີຜົນສະທ້ອນທີ່ເປັນອັນຕະລາຍຕໍ່ສັງຄົມ ແຕ່ຖືເບົາ ແລະ ເຊື່ອວ່າມັນຈະບໍ່ເກີດຂຶ້ນ ຫລື ບໍ່ຄາດຄະເນໄດ້ວ່າຜົນສະທ້ອນດັ່ງກ່າວ ຈະເກີດຂຶ້ນທັງໆທີ່ວ່າຕົນຕ້ອງຄາດຄະເນ ແລະ ສາມາດຄາດຄະເນໄດ້.

**ມາດຕາ 10. ການກະທຳຜິດຫລາຍສະຖານ**

ການກະທຳຜິດຫລາຍສະຖານ ແມ່ນການກະທຳຜິດຂອງບຸກຄົນຜູ້ໃດຜູ້ໜຶ່ງ ແຕ່ສອງຢ່າງຂຶ້ນໄປດ້ວຍການກະທຳອັນດຽວ ຫລື ດ້ວຍການກະທຳຫລາຍອັນທີ່ຜິດຕໍ່ຫລາຍມາດຕາຂອງກົດໝາຍອາຍາ ແລະ ຈະຖືກຕັດສິນພ້ອມໆກັນໃນສານດຽວກັນ.

**ມາດຕາ 11. ການກະທຳຜິດທີ່ບໍ່ເຂັດຫລາບ**

ການກະທຳຜິດທີ່ບໍ່ເຂັດຫລາບ.ແມ່ນການກະທຳຜິດຂອງຜູ້ຖືກຕັດສິນລົງໂທດຕັດອິດສະລະພາບ ດ້ວຍການກະທຳຜິດໂດຍເຈດຕະນາຊຶ່ງໄດ້ກະທຳຜິດໃໝ່ໂດຍເຈດຕະນາອີກ ໃນເວລາປະຕິ

ບັດໂທດຢູ່ນັ້ນ ຫລື ໄດ້ກະທຳຜິດໃໝ່ ໂດຍເຈດຕະນາອີກໃນສະຖານດຽວກັນຫລືຄ້າຍຄືກັນພາຍໃນກຳນົດຫ້າປີພາຍຫລັງທີ່ໄດ້ປະຕິບັດໂທດແລ້ວ.

**ມາດຕາ 12. ການກະກຽມໃຫ້ແກ່ການກະທຳຜິດ**

ການກະກຽມໃຫ້ແກ່ການກະທຳຜິດ ແມ່ນການຫາງຫາພາຫະນະອຸບປະກອນ, ການສ້າງເງື່ອນໄຂ ຫລື ປັດໃຈອື່ນໆໃຫ້ແກ່ການກະທຳຜິດໂດຍເຈດຕະນາ.

ການກະກຽມໃຫ້ແກ່ການກະທຳຜິດຈະຖືກລົງໂທດໄດ້ກໍຕໍ່ເມື່ອຫາກເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້ເທົ່ານັ້ນ.

ການກະກຽມໃຫ້ແກ່ການກະທຳຜິດ ຈະຖືກລົງໂທດຕາມມາດຕາທີ່ໄດ້ກຳນົດໂທດໃສ່ການກະທຳຜິດນັ້ນ.

**ມາດຕາ 13. ຄວາມພະຍາຍາມກໍ່ການກະທຳຜິດ**

ຄວາມພະຍາຍາມກໍ່ການກະທຳຜິດ. ແມ່ນການລົງມືກະທຳຜິດສ່ວນໃດສ່ວນໜຶ່ງໂດຍເຈດຕະນາ ແຕ່ຍ້ອນມີສາເຫດນອກຕົວມາຂັດຂວາງ ຊຶ່ງພາໃຫ້ການກະທຳດັ່ງກ່າວນັ້ນບໍ່ສຳເລັດຜົນ.

ຄວາມພະຍາຍາມກໍ່ການກະທຳຜິດ. ຈະຖືກລົງໂທດໄດ້ກໍຕໍ່ເມື່ອຫາກເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້ເທົ່ານັ້ນ.

ຄວາມພະຍາຍາມກໍ່ການກະທຳຜິດ. ຈະຖືກລົງໂທດຕາມ ມາດຕາທີ່ໄດ້ກຳນົດໂທດໃສ່ການກະທຳຜິດນັ້ນ.

**ມາດຕາ 14. ການເລີກລົມການກະທຳຜິດດ້ວຍຄວາມສະໝັກໃຈ**

ບຸກຄົນຜູ້ໃດຫາກໄດ້ຢຸດເຊົາການກະທຳຜິດຂອງຕົນດ້ວຍຄວາມສະໝັກໃຈ ໂດຍບໍ່ສືບຕໍ່ການກະທຳຜິດນັ້ນໃຫ້ສຳເລັດຜົນຢູ່ໃນໄລຍະຂອງການກະກຽມ ຫລື ຄວາມພະຍາຍາມກໍຕາມ ບຸກຄົນຜູ້ນັ້ນຈະບໍ່ມີຄວາມຮັບຜິດຊອບທາງອາຍາ ເວັ້ນເສັຽແຕ່ການກະທຳນັ້ນຫາກມີອົງປະກອບເປັນການກະທຳຜິດອື່ນ.

**ມາດຕາ 15. ນິຍາມຜູ້ກະທຳຜິດ**

ຜູ້ກະທຳຜິດແມ່ນບຸກຄົນຜູ້ໃດຜູ້ໜຶ່ງ ທີ່ມີການກະທຳ ຫລື ການເມີນເສີຍຊຶ່ງເປັນອັນຕະລາຍຕໍ່ສັງຄົມ ແລະ ມີ ອົງປະກອບເປັນການກະທຳຜິດຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 16. ການຮ່ວມມືໃນການກະທຳຜິດ**

ການຮ່ວມມືໃນການກະທຳຜິດ ແມ່ນການເຂົ້າຮ່ວມໃນ ການກະທຳຜິດໂດຍເຈດຕະນາແຕ່ສອງຄົນຂຶ້ນໄປ.

ບັນດາຜູ້ຮ່ວມມືໃນການກະທຳຜິດ ມີ: ຕົວການ,ຜູ້ ປະຕິບັດ, ຜູ້ຍຸແຍ່ ແລະ ຜູ້ສົມຮູ້ຮ່ວມຄິດ.

1. ຕົວການແມ່ນຜູ້ທີ່ໄດ້ວາງແຜນການ, ຈັດຕັ້ງ ຫລື ບັນຊາການກະທຳຜິດ;

2. ຜູ້ປະຕິບັດແມ່ນຜູ້ທີ່ໄດ້ລົງມືກະທຳຜິດໂດຍກົງ;

3. ຜູ້ຍຸແຍ່ແມ່ນຜູ້ທີ່ຊຸກຍູ້ໃຫ້ຜູ້ອື່ນໄປກະທຳຜິດ;

4. ຜູ້ສົມຮູ້ຮ່ວມຄິດແມ່ນຜູ້ທີ່ໄດ້ໃຫ້ການຊ່ວຍເຫລືອໂດຍເຈດຕະນາໃນການກະທຳຜິດ ຫລື ໃຫ້ຄຳໝັ້ນສັນຍາລ່ວງໜ້າວ່າຈະຊຸກເຊື່ອງປົກປິດຜູ້ກະທຳຜິດ, ພາຫະນະ, ອຸບປະກອນໃນການກະທຳຜິດຈະລົບລ້າງຮ່ອງຮອຍຂອງການກະທຳຜິດ ຫລື ຊຸກເຊື່ອງສິ່ງຂອງທີ່ຈະໄດ້ມາຈາກການກະທຳຜິດນັ້ນ.

## ໝວດທີ IV
## ວ່າດ້ວຍການພົ້ນຈາກຄວາມຮັບຜິດຊອບທາງອາຍາ.

### ມາດຕາ 17. ເດັກທີ່ບໍ່ທັນເຖິງກະສຽນອາຍຸທາງອາຍາ

ບຸກຄົນຜູ້ໃດຫາກຍັງມີອາຍຸບໍ່ທັນເຖິງ ສິບຫ້າ ປີ ໃນເວລາກະທຳຜິດກໍຈະບໍ່ມີຄວາມຮັບຜິດຊອບທາງອາຍາ ແຕ່ສານຕ້ອງນຳໃຊ້ມາດຕະການທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້.

### ມາດຕາ 18. ຄົນທີ່ມີອາການເສັຽຈິດ

ບຸກຄົນຜູ້ໃດຜູ້ໜຶ່ງໄດ້ລົງມືກະທຳຜິດໃນຂະນະທີ່ຕົນມີ ອາການເສັຽສະຕິ ຫລື ເປັນບ້າເສັຽຈິດ ຊຶ່ງບໍ່ສາມາດຮັບຮູ້ໄດ້ເຖິງຜົນສະທ້ອນຂອງການກະທຳຂອງຕົນ ຈະບໍ່ມີຄວາມຮັບຜິດຊອບທາງອາ ຍາ. ຕໍ່ບຸກຄົນດັ່ງກ່າວ ສານອາດຈະອອກຄຳສັ່ງໃຫ້ທຳການປິ່ນປົວຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ບຸກຄົນຜູ້ໃດຫາກໄດ້ກະທຳຜິດໃນຂະນະທີ່ມີການມຶນເມົາຍ້ອນເຫລົ້າ ຫລື ຢາເສບຕິດກໍຈະບໍ່ຫລຸດພົ້ນຈາກຄວາມຮັບຜິດຊອບທາງອາຍາແຕ່ຢ່າງໃດ.

### ມາດຕາ 19. ການຖືກບັງຄັບ ແລະ ການຖືກຂົ່ມຂູ່

ບຸກຄົນຜູ້ໃດຫາກໄດ້ກະທຳຜິດດ້ວຍການຖືກບັງຄັບ ຫລື ຖືກຂົ່ມຂູ່ ຊຶ່ງຕົນບໍ່ສາມາດຫລີກລ້ຽງໄດ້ ກໍຈະບໍ່ມີຄວາມຮັບຜິດຊອບທາງອາຍາ.

ໃນກໍລະນີທີ່ການກະທຳເລົ່ານັ້ນ ຫາກເປັນການກະທຳຜິດຖານຄະລຸໂທດ ການຖືກບັງຄັບ ຫລື ການຖືກຂົ່ມຂູ່ ເປັນພຽງແຕ່ສາເຫດທີ່ພາໃຫ້ມີການຫລຸດຜ່ອນຄວາມຮັບຜິດຊອບທາງອາຍາເທົ່ານັ້ນ.

**ມາດຕາ 20. ການປ້ອງກັນຕົວ**

ການປ້ອງກັນຕົວ ແມ່ນ ການກະທຳຂອງບຸກຄົນຜູ້ໃດຜູ້ໜຶ່ງທີ່ກໍ່ຂຶ້ນ ເພື່ອ ປົກປ້ອງຜົນປະໂຫຍດຂອງລັດ ຫລື ຂອງສັງຄົມ, ຊີວິດ, ສຸກຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນເອງ ຫລື ຂອງບຸກຄົນອື່ນ, ເພື່ອຕ້ານການບຸກລຸກທີ່ເປັນອັນຕະລາຍຕໍ່ສັງຄົມ. ແຕ່ການບຸກລຸກນັ້ນໃຫ້ມີຈິງ ແລະ ເປັນອັນຕະລາຍແທ້. ການປ້ອງກັນຕ້ອງກະທຳໃນເວລານັ້ນ ແລະ ບໍ່ໃຫ້ກາຍຂອບເຂດຂອງການບຸກລຸກ.

ການປ້ອງກັນຕົວຈະບໍ່ຖືວ່າເປັນການກະທຳຜິດທາງອາຍາ.

**ມາດຕາ 21. ສະພາວະທີ່ຈຳເປັນ**

ສະພາວະທີ່ຈຳເປັນ ແມ່ນການກະທຳຂອງບຸກຄົນຜູ້ໃດຜູ້ໜຶ່ງທີ່ກໍ່ຂຶ້ນ ດ້ວຍຄວາມຈຳເປັນເພື່ອຫລີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ຜົນປະໂຫຍດຂອງລັດ ຫລື ຂອງສັງຄົມ, ຊີວິດ, ສຸກຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນເອງ ຫລື ຂອງບຸກຄົນອື່ນ ແລະ ໃນເມື່ອໄພອັນຕະລາຍດັ່ງກ່າວຫາກບໍ່ສາມາດຫລີກເວັ້ນໄດ້ດ້ວຍວິທີອື່ນ ແລະ ບໍ່ເກີດຈາກການກະທຳຜິດຂອງຕົນເອງ ແລະ ຜົນເສັຽຫາຍທີ່ເກີດຈາກການກະທຳນັ້ນ ຕ້ອງໜ້ອຍກວ່າຜົນເສັຽຫາຍທີ່ຈະເກີດຂຶ້ນຈາກໄພອັນຕະ ລາຍ.

ສະພາວະທີ່ຈຳເປັນຈະບໍ່ຖືວ່າເປັນການກະທຳຜິດທາງອາຍາ.

**ມາດຕາ 22 . ບັນດາການກະທຳຜິດຊຶ່ງຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສັຽຫາຍ**

ໃນກໍລະນີທີ່ການກະທຳຜິດ ຫາກບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຖ້າວ່າບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສັຽຫາຍກໍຈະດຳເນີນຄະດີບໍ່ໄດ້ຄື: ການທຳຮ້າຍຮ່າງກາຍ ລະຫ່ວາງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດ ຫລື ບໍ່ເສັຽອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດຊາກສົບ ຫລື ຊື່ສຽງຂອງຜູ້ຕາຍ, ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ, ການທຳມິດສະຈານ, ການລ່ວງລະເມີດເຄຫະສະຖານ ແລະ ການລ່ວງລະເມີດຄວາມລັບສ່ວນຕົວ.

ການຖອນຄຳຮ້ອງຟ້ອງຂອງຜູ້ຖືກເສັຽຫາຍກໍພາໃຫ້ການດຳເນີນຄະດີຢຸດຕິລົງ.

**ມາດຕາ 23. ຜູ້ກະທຳຜິດໄດ້ເສັຽຊີວິດ**

ການດຳເນີນຄະດີອາຍາຈະຢຸດຕິລົງ ໃນເມື່ອຜູ້ກະທຳຜິດຫາກໄດ້ເສັຽຊີວິດ ຈະແມ່ນກ່ອນ ຫລື ຫລັງການຮ້ອງຟ້ອງກໍຕາມ.

**ມາດຕາ 24. ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ**

ຈະບໍ່ສາມາດຮ້ອງຟ້ອງທາງອາຍາໄດ້ ຖ້າກາຍກຳນົດ:

- ໜຶ່ງປີ ສຳລັບການກະທຳຜິດໃນຖານລະຫຸໂທດ;
- ເຈັດປີ ສຳລັບການກະທຳຜິດໃນຖານໂທສານຸໂທດ;

- ສິບຫ້າປີ ສຳລັບການກະທຳຜິດໃນຖານຄະຣຸໂທດ.

ອາຍຸຄວາມໃນການຮ້ອງຟ້ອງທາງອາຍານັ້ນ ໃຫ້ນັບແຕ່ມື້ໄດ້ກະທຳຜິດເປັນຕົ້ນໄປ. ໃນກໍລະນີທີ່ໄດ້ມີການກະທຳຜິດເທື່ອໃໝ່ ພາຍໃນກຳນົດອາຍຸຄວາມຂອງການກະທຳຜິດ ເທື່ອກ່ອນນັ້ນ ອາຍຸຄວາມໃນການຮ້ອງຟ້ອງດັ່ງກ່າວ ກໍໃຫ້ໄລ່ແຕ່ມື້ກະທຳຜິດເທື່ອໃໝ່ເປັນຕົ້ນໄປ. ໃນກໍລະນີທີ່ໄດ້ຫລົບຫລີກຈາກການດຳເນີນຄະດີກໍຈະໄລ່ແຕ່ມື້ຊຶ່ງຜູ້ກະທຳຜິດໄດ້ເຂົາສະເໜີຕົວ ຫລື ຖືກຈັບຕົວເປັນຕົ້ນໄປ.

## ໝວດທີ V
## ວ່າດ້ວຍໂທດ

### ມາດຕາ 25. ຈຸດປະສົງຂອງການລົງໂທດ

ການລົງໂທດບໍ່ພຽງແຕ່ ຈະມີຈຸດປະສົງລົງໂທດຜູ້ກະທຳຜິດເທົ່ານັ້ນ ແຕ່ຫາກຍັງມີຈຸດປະສົງເພື່ອດັດສ້າງ ແລະ ສຶກສາອົບຮົມຜູ້ຖືກລົງໂທດໃຫ້ມີຈິດໃຈບໍລິສຸດຕໍ່ການອອກແຮງງານ, ໃຫ້ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເຄັ່ງຄັດ, ໃຫ້ເຄົາລົບລະບຽບການດຳລົງຊີວິດຂອງສັງຄົມພ້ອມທັງເປັນການປ້ອງກັນບໍ່ໃຫ້ການກະທຳຜິດເທື່ອໃໝ່ເກີດຂຶ້ນສຳລັບຜູ້ຖືກລົງໂທດ ແລະ ສຳລັບບຸກຄົນອື່ນອີກດ້ວຍ.

ການລົງໂທດ ແມ່ນ ບໍ່ມີຈຸດປະສົງຈະກໍ່ຄວາມທຸກທໍລະມານແກ່ຮ່າງກາຍ ຫລື ຢຽບຢໍ່າກຽດສັກສີຂອງມະນຸດ.

### ມາດຕາ 26. ປະເພດຂອງໂທດ

ກ.) ໂທດຕົ້ນຕໍ:

1. ຕຳນິວິຈານຕໍ່ໜ້າມະຫາຊົນ;
2. ດັດສ້າງໂດຍບໍ່ຕັດອິດສະລະພາບ;
3. ຕັດອິດສະລະພາບ;
4. ປະຫານຊີວິດ;

ຂ.) ໂທດເພີ່ມ :

1. ປັບໃໝ (ໃນບາງກໍລະນີ ອາດຈະເປັນໂທດຕົ້ນຕໍ);
2. ຮິບວັດຖຸສິ່ງຂອງ;
3. ຮິບຊັບ;
4. ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ;
5. ຈຳກັດທີ່ຢູ່.

ໂທດຮິບຊັບ ແລະ ຈຳກັດທີ່ຢູ່ນັ້ນຈະລົງໃສ່ຜູ້ກະທຳຜິດໄດ້ກໍຕໍ່ເມື່ອໂທດດັ່ງກ່າວຫາກໄດ້ກຳນົດໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້ເທົ່ານັ້ນ.

ນອກຈາກໂທດຕົນຕໍ ແລະ ໂທດເພີ່ມນັ້ນແລ້ວສານອາດຈະສະເໜີໃຫ້ອົງການທີ່ກ່ຽວຂ້ອງຖອນໃບຂັບຂີ່ ຫລື ໃບອານຸຍາດອື່ນໆ, ປົດຕຳແໜ່ງ, ຫ້າມດຳລົງຕຳແໜ່ງ ຫລື ປະກອບອາຊີບໃດອາຊີບໜຶ່ງ, ປິດຫລຽນໄຊ, ຫລຽນກາ ຫລື ນາມມະຍົດ ແລະ ເນລະເທດຜູ້ກະທຳຜິດ.

## ມາດຕາ 27. ໂທດຕຳໜິວິຈານຕໍ່ໜ້າມະຫາຊົນ

ໂທດຕຳໜິວິຈານຕໍ່ໜ້າມະຫາຊົນ ແມ່ນການຕຳໜິວິຈານຜູ້ກະທຳຜິດໃນທີ່ປະຊຸມສານ. ໃນກໍລະນີຈຳເປັນກໍອາດຈະເອົາຄຳຕັດສິນຂອງສານ ລົງໃນໜ້າໜັງສືພິມ ຫລື ດ້ວຍວິທີການອື່ນໆກໍໄດ້.

## ມາດຕາ 28 . ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ

ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ. ແມ່ນໂທດທີ່ຈະລົງໃສ່ຜູ້ກະທຳຜິດ ດ້ວຍການອອກແຮງງານຢູ່ບ່ອນທີ່ຜູ້ກ່ຽວເຮັດວຽກ ຫລື ຢູ່ສະຖານທີ່ອື່ນ ໂດຍຫັກເອົາເງິນແຕ່ ຫ້າ ຫາ ຊາວສ່ວນຮ້ອຍ ຂອງເງິນຄ່າແຮງງານທັງໝົດຂອງຜູ້ກະທຳຜິດ ເຂົາເປັນລາຍໄດ້ຂອງລັດ ຕາມຄຳຕັດສິນຂອງສານ. ໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ແມ່ນ ບໍ່ໃຫ້ເກີນໜຶ່ງປີ.

## ມາດຕາ 29. ໂທດຕັດອິດສະລະພາບ

ໂທດຕັດອິດສະລະພາບມີກຳນົດແຕ່ສາມເດືອນ ຫາ ຊາວປີ ຫລື ຕະຫລອດຊີວິດ.

ຫ້າມລົງໂທດຕັດອິດສະລະພາບຕະຫລອດຊີວິດໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ແລະ ຜູ້ຍິງທີ່ຖືພາ ໃນເວລາກະທຳຜິດ.

## ມາດຕາ 30. ໂທດປະຫານຊີວິດ

ໂທດປະຫານຊີວິດແມ່ນມາດຕະການພິເສດຂອງການລົງໂທດ ທີ່ຈະລົງໃສ່ຜູ້ກະທຳຜິດໃນສະຖານໜັກເປັນພິເສດ ຊຶ່ງໄດ້ບົ່ງໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້.

ການປະຫານຊີວິດແມ່ນປະຕິບັດດ້ວຍການຍິງເປົ້າ.

ຫ້າມລົງໂທດປະຫານຊີວິດໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ໃນເວລາກະທຳຜິດ ແລະ ຜູ້ຍິງທີ່ຖືພາໃນເວລາກະທຳຜິດ ຫລື ໃນເວລາຕັດສິນ ຫລື ໃນເວລາປະຕິບັດໂທດ.

## ມາດຕາ 31. ໂທດປັບໃໝ

ໂທດປັບໃໝແມ່ນໂທດທາງດ້ານການເງິນຊຶ່ງແມ່ນສານເປັນຜູ້ວາງຕາມກໍລະນີ ແລະ ຂອບເຂດທີ່ກົດໝາຍໄດ້ກຳນົດໄວ້.

ຈຳນວນເງິນທີ່ຈະປັບໃໝນັ້ນ ຕ້ອງກຳນົດຕາມຄວາມຮ້າຍແຮງຂອງການກະທຳຜິດໂດຍອີງໃສ່ສະພາບເສດຖະກິດຂອງຜູ້ກະທຳຜິດ. ໃນກໍລະນີທີ່ຜູ້ກ່ຽວຫາກບໍ່ສາມາດຈະເສັຽຄ່າປັບໃໝໄດ້ໃນເວລານັ້ນສານກໍສາມາດປ່ຽນໂທດປັບໃໝມາເປັນໂທດດັດສ້າງໂດຍບໍ່ຕັດອິດສະລະພາບ.

ຫ້າມເອົາໂທດປັບໃໝປ່ຽນມາເປັນໂທດຕັດອິດສະລະພາບ ແລະ ຫ້າມເອົາໂທດຕັດອິດສະລະພາບປ່ຽນມາເປັນໂທດປັບໃໝ.

**ມາດຕາ 32. ໂທດຣິບຊັບ ແລະ ໂທດຣິບວັດຖຸສິ່ງຂອງ**

ໂທດຣິບຊັບ ແມ່ນການເອົາຊັບທັງໝົດ ຫລື ສ່ວນໃດສ່ວນໜຶ່ງທີ່ເປັນກຳມະສິດຂອງຜູ້ກະທຳຜິດມາເປັນຂອງລັດໂດຍບໍ່ມີການໃຊ້ແທນ.

ໂທດຣິບຊັບຈະລົງ ໃສ່ໄດ້ແຕ່ການກະທຳຜິດ ທີ່ເປັນອັນຕະລາຍຮ້າຍແຮງ ຊຶ່ງໄດ້ກຳນົດໄວ້ຢູ່ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້ເທົ່ານັ້ນ.

ໃນກໍລະນີ ທີ່ໄດ້ຕົກລົງຣິບຊັບທັງໝົດ ຕ້ອງໄດ້ຍົກເວັ້ນຊັບທີ່ຈຳເປັນສຳລັບການດຳລົງຊີວິດຂອງຜູ້ກະທຳຜິດ ແລະ ຄອບຄົວຕາມບັນຊີທີ່ໄດ້ຄັດຕິດນຳກົດໝາຍອາຍາສະບັບນີ້. ໃນກໍລະນີທີ່ໄດ້ຕົກລົງຣິບຊັບສ່ວນໃດສ່ວນໜຶ່ງ ສານຕ້ອງກຳນົດຊັບທີ່ຈະຖືກຣິບນັ້ນໃຫ້ຈະແຈ້ງ.

ໂທດຣິບວັດຖຸສິ່ງຂອງ ແມ່ນການຣິບວັດຖຸສິ່ງຂອງທີ່ໃຊ້ໃນການກະທຳຜິດ ຫລື ສຳລັບໃຊ້ໃນການກະທຳຜິດ ຫລື ໄດ້ມາຈາກການກະທຳຜິດໂດຍເຈດຕະນາມາເປັນຂອງລັດ. ວັດຖຸສິ່ງຂອງຂອງບຸກຄົນອື່ນ ທີ່ຮັບໃຊ້ການກະທຳຜິດນັ້ນ ຈະຖືກຣິບເປັນຂອງລັດໄດ້ກໍຕໍ່ເມື່ອເຈົ້າຂອງຜູ້ທີ່ໃຫ້ຢືມຫາກບໍ່ມີຄວາມບໍລິສຸດໃຈ ຫລື ໃນເມື່ອເຫັນວ່າການຣິບວັດຖຸສິ່ງຂອງນັ້ນ ມີຄວາມຈຳເປັນ ເພື່ອປົກປັກຮັກສາສັງຄົມ.

ວັດຖຸສິ່ງຂອງທີ່ເປັນກຳມະສິດຂອງລັດ ແລະ ລວມໝູ່ນັ້ນຈະບໍ່ຖືກຣິບແຕ່ຫາກຍັງຕ້ອງສົ່ງຄືນໃຫ້ແກ່ອົງ ການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 33. ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ**

ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ແມ່ນການຕັດສິດ ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງຂອງຜູ້ກະທຳຜິດໃນຖານຄະຣຸໂທດ.

ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ແມ່ນບໍ່ໃຫ້ເກີນ ຫ້າປີ ນັບແຕ່ມື້ໄດ້ປະຕິບັດໂທດສິ້ນສຸດແລ້ວ ເປັນຕົນໄປ.

**ມາດຕາ 34. ໂທດຈຳກັດທີ່ຢູ່**

ໂທດຈຳກັດທີ່ຢູ່ ແມ່ນການຫ້າມຜູ້ຖືກຕັດສິນອອກຈາກສະຖານທີ່ແຫ່ງໃດແຫ່ງໜຶ່ງ ຫລື ຫ້າມເຂົາໄປຢູ່ສະຖານທີ່ແຫ່ງໃດແຫ່ງໜຶ່ງຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນຂອງສານ.

ໂທດຈຳກັດທີ່ຢູ່ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ແມ່ນບໍ່ໃຫ້ເກີນ ຫ້າປີ ນັບແຕ່ມື້ປະຕິບັດໂທດສິ້ນສຸດແລ້ວເປັນຕົນໄປ.

ຫ້າມລົງໂທດຈຳກັດທີ່ຢູ່ໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ແລະ ຜູ້ຍິງທີ່ຖືພາ ຫລື ຜູ້ຍິງທີ່ມີລູກຊຶ່ງອາຍຸບໍ່ທັນເຖິງແປດປີໃນເວລາກະທຳຜິດ.

ໂທດຈຳກັດທີ່ຢູ່ຈະບົ່ງໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້.

## ໝວດທີ VI
## ວ່າດ້ວຍການວາງໂທດ.

**ມາດຕາ 35. ຫລັກການລວມຂອງການວາງໂທດ**

ສານເປັນຜູ້ວາງໂທດ ໃນຂອບເຂດຂອງມາດຕາກົດໝາຍທີ່ໄດ້ກຳນົດໂທດ ໃສ່ການກະທຳຜິດນັ້ນ. ໃນການວາງໂທດນັ້ນ ສານຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີການຫລຸດຜ່ອນ ຫລື ການເພີ່ມຄວາມຮັບຜິບຊອບ ທາງອາຍາ.

**ມາດຕາ 36. ສາເຫດທີ່ພາໃຫ້ມີການຫລຸດຜ່ອນ ຄວາມຮັບຜິດຊອບທາງອາຍາ**

ສາເຫດທີ່ພາໃຫ້ມີການຫລຸດຜ່ອນຄວາມຮັບຜິດຊອບທາງອາຍາມີ ຄື:

1. ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາ ສິບແປດ ປີ;

2. ຜູ້ກະທຳຜິດແມ່ນຜູ້ຍິງທີ່ຖືພາ;

3. ການປ້ອງກັນຕົວເກີນຂອບເຂດ;

4. ການກະທຳຜິດຍ້ອນຖືກແຕະຕ້ອງທາງດ້ານຈິດໃຈຢ່າງໜັກຈົນບໍ່ສາມາດຄຸມສະຕິໄວ້ໄດ້ດ້ວຍການກະທຳອັນບໍ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກເຄາະຮ້າຍ;

5. ການກະທຳຜິດຍ້ອນຖືກບັງຄັບ ຫລື ຖືກຂົ່ມຂູ່;

6. ຜູ້ກະທຳຜິດສະກັດກັ້ນຜົນເສັຽຫາຍຂອງການກະທຳຜິດທີ່ຕົນໄດ້ກໍ່ຂຶ້ນ ຫລື ຈິງໃຈໃຊ້ແທນຄ່າເສັຽຫາຍໂດຍສະໝັກໃຈ;

7. ການກະທຳຜິດຍ້ອນສະພາບຫຍຸ້ງຍາກໜັກໜ່ວງທາງສ່ວນຕົວ ຫລື ທາງຄອບຄົວ;

8. ຜູ້ກະທຳຜິດຮູ້ສຶກກິນແໜງແລ້ວຈິງໃຈມອບຕົວຕໍ່ເຈົາໜ້າທີ່, ຮັບສາລະພາບ ແລະ ເປີດເຜີຍການກະທຳຜິດຂອງຕົນ ແລະ ການກະທຳຜິດຂອງຜູ້ອື່ນ;

9. ການກະທຳຜິດຄັ້ງທຳອິດ ຖ້າວ່າການກະທຳຜິດດັ່ງກ່າວຫາກບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ;

10. ຜູ້ກະທຳຜິດທີ່ໄດ້ມີຄຸນງາມຄວາມດີຕໍ່ປະເທດຊາດ.

ໃນການວາງໂທດອອກນັ້ນ ສານອາດອີງໃສ່ ສາເຫດອື່ນທີ່ພາໃຫ້ມີການຫລຸດຜ່ອນຄວາມຮັບຜິດຊອບທາງອາຍາທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ກໍໄດ້.

**ມາດຕາ 37. ສາເຫດທີ່ພາໃຫ້ມີການເພີ້ມຄວາມຮັບຜິດຊອບທາງອາຍາ**

ສາເຫດທີ່ພາໃຫ້ມີການເພີ້ມຄວາມຮັບຜິດຊອບທາງອາຍາ ມີຄື:

1. ຜູ້ທີ່ເຄີຍໄດ້ກະທຳຜິດມາກ່ອນແລ້ວ ມາກະທຳຜິດເທື່ອໃໝ່ອີກ;

2. ການກະທຳຜິດໂດຍມີການຈັດຕັ້ງເປັນກຸ່ມ;

3. ການກະທຳຜິດຍ້ອນຄວາມໂລບມາກໂລພາ;

4. ການກະທຳຜິດຕໍ່ເດັກທີ່ບໍ່ທັນເຖິງກະສຽນອາຍຸ, ຜູ້ເຖົ້າ, ຜູ້ທີ່ບໍ່ສາມາດປ້ອງກັນຕົວໄດ້, ຜູ້ທີ່ຂຶ້ນກັບຕົນ ທາງດ້ານວັດຖຸ ຫລື ດ້ານອື່ນໆ, ຜູ້ທີ່ຢູ່ໃຕ້ການບັງຄັບບັນຊາຂອງຕົນ;

5. ການຍຸແຍ່ເດັກທີ່ບໍ່ທັນເຖິງກະສຽນອາຍຸໄປກະທຳຜິດ, ການຂົນຂວາຍເດັກທີ່ບໍ່ທັນເຖິງກະສຽນອາຍຸເຂົາຮ່ວມໃນການກະທຳຜິດ;

6. ການກະທຳຜິດແບບໂຫດຮ້າຍປ່າເຖື່ອນ ຫລື ແບບປະຈານຜູ້ຖືກເຄາະຮ້າຍ;

7. ການກະທຳຜິດທີ່ພາໃຫ້ມີຜົນສະທ້ອນອັນໜັກໜ່ວງ;

8. ການສວຍໂອກາດກະທຳຜິດໃນເວລາເກີດໄພພິບັດ;

9. ການກະທຳຜິດດ້ວຍວິທີທີ່ມີລັກສະນະເປັນອັນຕະລາຍຕໍ່ສາທາລະນະຊົນ;

10. ການກະທຳຜິດຍ້ອນເມົາເຫລົ້າ ຫລື ເມົາຢາເສບຕິດ.ອີງຕາມລັກສະນະຂອງການກະທຳຜິດດັ່ງກ່າວ ສານມີສິດຊີ້ຂາດວ່າ ການກະທຳຜິດນັ້ນບໍ່ເປັນສາເຫດທີ່ພາໃຫ້ມີການເພີ່ມຄວາມຮັບຜິດຊອບທາງອາຍາ;

11. ການໃຫ້ການຊັດທອດຄວາມຜິດໃສ່ຜູ້ທີ່ຕົນຮູ້ແຈ້ງວ່າເປັນຄົນບໍລິສຸດ;

12. ຜູ້ທີ່ໄດ້ກະທຳຜິດ ເພື່ອປົກປິດການກະທຳຜິດອື່ນ ຫລື ໃຊ້ຄວາມຮຸນແຮງເພື່ອຫລົບໜີ.

**ມາດຕາ 38. ການວາງໂທດໃສ່ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ.**

ການວາງໂທດໃສ່ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດໃຫ້ອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງມັນ, ຕາມລະດັບການປະຕິບັດເຈດຕະນາຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ການກະທຳຜິດບໍ່ສຳເລັດນັ້ນ. ສານຈະວາງໂທດຕ່ຳກວ່າທີ່ກົດໝາຍກຳນົດໄວ້ກໍໄດ້.

**ມາດຕາ 39. ການວາງໂທດໃສ່ການສົມຮູ້ຮ່ວມຄິດ ແລະ ການຍຸແຍ່ໃນການກະທຳຜິດ.**

ການວາງໂທດໃສ່ການສົມຮູ້ຮ່ວມຄິດ ແລະ ການຍຸແຍ່ໃນການກະທຳຜິດໃຫ້ວາງເທົ່າກັນກັບການຮ່ວມມືອື່ນໆ ໃນການກະທຳຜິດນັ້ນ. ແຕ່ອີງຕາມລະດັບ ແລະ ລັກສະນະຂອງການສົມຮູ້ຮ່ວມຄິດ ແລະ ການຍຸແຍ່ແລ້ວ ສານຈະ ວາງໂທດຕ່ຳກ່ວາທີ່ກົດໝາຍກຳນົດໄວ້ກໍໄດ້.

**ມາດຕາ40. ການວາງໂທດໃສ່ການກະທຳຜິດຫລາຍສະຖານ**

ໃນການວາງໂທດໃສ່ການກະທຳຜິດອັນດຽວທີ່ຜິດຕໍ່ຫລາຍມາດຕານັ້ນ ໃຫ້ເອົາມາດຕາກົດໝາຍທີ່ໄດ້ກຳນົດໂທດໜັກກ່ວາໝູ່ມາວາງໃສ່.

ໃນການວາງໂທດໃສ່ການກະທຳຜິດຫລາຍອັນທີ່ຜິດຕໍ່ຫລາຍມາດຕາ ໃຫ້ວາງໂທດໃສ່ແຕ່ລະການກະທຳຜິດ ແລ້ວເອົາບັນດາໂທດດັ່ງກ່າວມາສົມໃສ່ກັນທັງໝົດ ແຕ່ບໍ່ໃຫ້ເກີນໂທດສູງສຸດຂອງການກະທຳຜິດດັ່ງກ່າວທີ່ໜັກກ່ວາໝູ່ ຊຶ່ງກົດໝາຍໄດ້ກຳນົດໄວ້.

ອາດຈະຕື່ມໂທດເພີ່ມອັນໃດອັນໜຶ່ງໃສ່ໂທດຕົນຕໍອີກກໍໄດ້ໃນກໍລະນີທີ່ໂທດເພີ່ມຂອງການກະທຳຜິດດັ່ງກ່າວຫາກໄດ້ບົ່ງໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້.

ໃນກໍລະນີທີ່ພາຍຫລັງໄດ້ຕັດສິນແລ້ວ ຫລື ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ຫລື ຜູ້ກະທຳຜິດກໍໄດ້ປະຕິບັດໂທດສ່ວນໃດສ່ວນໜຶ່ງ ຫລື ທັງໝົດແລ້ວ ຫາກຍັງເຫັນຕື່ມອີກວ່າຜູ້ກະທຳຜິດໄດ້ກະທຳຜິດມາກ່ອນແລ້ວການວາງໂທດກໍໃຫ້ປະຕິບັດຕາມວິທີການທີ່ກ່າວມາຂ້າງເທິງນີ້.

ໃນກໍລະນີ ທີ່ພາຍຫລັງຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ຫລື ໃນເວລາປະຕິບັດໂທດຢູ່ນັ້ນ ຖ້າວ່າຜູ້ຖືກຕັດສິນຫາກໄດ້ກະທຳຜິດໃໝ່ອີກ ສານຈະຕື່ມໂທດເກົ່າທີ່ຍັງບໍ່ທັນໄດ້ປະຕິບັດ ໃສ່ໂທດທີ່ຕັດສິນໃໝ່ບາງສ່ວນ ຫລື ທັງໝົດກໍໄດ້.

ສຳລັບໂທດປັບໃໝນັ້ນໃຫ້ປະຕິບັດແຕ່ລະອັນ, ຈະເອົາມາສົມໃສ່ກັນ ຫລື ສົມໃສ່ໂທດປະເພດອື່ນຕາມວິທີກ່າວມາຂ້າງເທິງນັ້ນ ແມ່ນບໍ່ໄດ້.

**ມາດຕາ 41. ການວາງໂທດໃສ່ການກະທຳຜິດທີ່ບໍ່ເຂັດ ຫລາບ**

ການວາງໂທດໃສ່ການກະທຳຜິດທີ່ບໍ່ເຂັດຫລາບ ໃນການກະທຳຜິດຖານໂທສານຸໂທດນັ້ນໃຫ້ເອົາໂທດທີ່ສານຈະວາງໃສ່ຜູ້ກະທຳຜິດໃນກໍລະນີທຳມະດາມາສົມໃສ່ເຄິ່ງໜຶ່ງຂອງໂທດດັ່ງກ່າວ.

ສ່ວນ ການກະທຳຜິດທີ່ບໍ່ເຂັດຫລາບໃນການກະທຳຜິດຖານຄະຣຸໂທດ ໄດ້ເປັນສາເຫດໜຶ່ງທີ່ພາໃຫ້ເພີ່ມຄວາມຮັບຜິດຊອບທາງອາຍາ ຕາມທີ່ບົ່ງໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້.

**ມາດຕາ 42 . ການພາກໂທດ**

ການພາກໂທດ ຕັດອິດສະລະພາບ, ໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ ຫລື ໂທດປັບໃໝ ທີ່ເປັນໂທດຕົນຕໍ ແມ່ນການໂຈະການປະຕິບັດໂທດນີ້ໄວ້ ຫ້າ ປີ. ຖ້າວ່າພາຍໃນກຳນົດດັ່ງກ່າວ ຜູ້ຖືກຕັດສິນ ຫາກບໍ່ໄດ້ກະທຳຜິດໃໝ່ ໂດຍເຈດຕະນາແລ້ວຖືກສານລົງໂທດຕັດອິດສະລະພາບ ແລະຄຳຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດແລ້ວ ຜູ້ກ່ຽວກໍຈະໄດ້ປະຕິບັດໂທດໃໝ່ ລວມທັງໂທດເກົ່າທີ່ພາກໄວ້ນັ້ນອີກດ້ວຍ.

**ມາດຕາ 43. ການຄິດໄລ່ການກັກຂັງພາງເຂົາໃນການປະຕິບັດໂທດ**

ກຳນົດເວລາການກັກຂັງພາງທັງໝົດຕ້ອງຄິດໄລ່ເຂົາໃນການປະຕິບັດໂທດຕັດອິດສະລະພາບ ຫລື ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ. ການກັກຂັງພາງ ໜຶ່ງວັນ ແມ່ນເທົ່າກັນກັບໂທດຕັດອິດສະລະພາບໜຶ່ງວັນ ຫລື ເທົ່າກັນກັບໂທດດັດສ້າງໂດຍບໍ່ຕັດອິດສະລະພາບສາມວັນ.

**ມາດຕາ 44. ການພົ້ນຈາກການລົງໂທດດ້ວຍການສົ່ງຜູ້ກະທຳຜິດໃຫ້ອຳນາດການປົກຄອງ ຫລື ອົງການຈັດຕັ້ງສັງຄົມສຶກສາອົບຮົມ.**

ຖ້າຫາກເຫັນວ່າການກະທຳເປັນການກະທຳຜິດໃນຖານລະຫຸໂທດ ແລະ ບຸກຄະລິກກະພາບຂອງຜູ້ກະທຳຜິດນັ້ນບໍ່ເປັນອັນຕະລາຍຕໍ່ສັງຄົມ ສານອາດຈະສົ່ງຜູ້ກະທຳຜິດໃຫ້ອຳນາດການປົກຄອງ ຫລື ອົງການຈັດຕັ້ງສັງຄົມ ສຶກສາອົບຮົມກໍໄດ້.

## ໝວດທີ VII
## ວ່າດ້ວຍສາເຫດທີ່ພາໃຫ້ການປະຕິບັດໂທດຕົກໄປ ແລະ ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ.

**ມາດຕາ 45. ສາເຫດທີ່ພາໃຫ້ມີການປະຕິບັດໂທດຕົກໄປ**

ການປະຕິບັດໂທດທາງອາຍາຈະຕົກໄປໃນເມື່ອຫາກມີສາເຫດດັ່ງຕໍ່ລົງໄປນີ້:

- ຜູ້ຖືກຕັດສິນລົງໂທດໄດ້ເສັຽຊີວິດ;
- ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໝົດໄປ;
- ຜູ້ຖືກຕັດສິນໄດ້ຮັບອະໄພຍະໂທດ.

**ມາດຕາ 46. ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ**

ໂທດທີ່ສານວາງໃສ່ຜູ້ກະທຳຜິດຈະບໍ່ສາມາດປະຕິບັດໄດ້ ຖ້າຫາກກາຍກຳນົດເວລາທີ່ກ່າວໄວ້ລຸ່ມນີ້:

- ໜຶ່ງປີ ສຳລັບໂທດຖານລະຫຸໂທດ;
- ເຈັດປີ ສຳລັບໂທດຖານໂທສານຸໂທດ;
- ສິບຫ້າປີ ສຳລັບໂທດຖານຄະຣຸໂທດ.

ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໃຫ້ນັບແຕ່ມື້ທີ່ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ. ໃນກໍລະນີທີ່ໄດ້ກະທຳຜິດເທື່ອໃໝ່ພາຍໃນກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໃສ່ການກະທຳຜິດເທື່ອກ່ອນນັ້ນ ອາຍຸຄວາມດັ່ງກ່າວໃຫ້ໄລ່ນັບແຕ່ມື້ກະທຳຜິດເທື່ອໃໝ່ນັ້ນເປັນຕົ້ນໄປ. ໃນກໍລະນີທີ່ໄດ້ຫລົບຫລີກຈາກການປະຕິບັດໂທດ ພາຍໃນກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນ ອາຍຸຄວາມດັ່ງກ່າວໃຫ້ໄລ່ນັບແຕ່ມື້ຜູ້ຖືກຕັດສິນເຂົາສະເໜີຕົວຫລືຖືກຈັບຕົວເປັນຕົ້ນໄປ.

**ມາດຕາ 47. ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ**

ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂຕາມຄຳສະເໜີຂອງຄະນະຮັບຜິດຊອບຄ້າຍດັດສ້າງກໍສາມາດປະຕິບັດຕໍ່ຜູ້ປະຕິບັດໂທດທີ່ກ້າວໜ້າ, ຝຶກຝົນຫລໍ່ຫລອມຕົນເອງ, ເປັນແບບຢ່າງໃນ

ການອອກແຮງງານ ຊຶ່ງໄດ້ປະຕິບັດໂທດມາແລ້ວເຄິ່ງໜຶ່ງ ສຳລັບຜູ້ກະທຳຜິດທີ່ມີອາຍຸຕ່ຳກວ່າ ສິບແປດປີ ໃນເວລາກະທຳຜິດ, ສອງສ່ວນສາມສຳລັບຜູ້ກະທຳຜິດທີ່ມີອາຍຸແຕ່ສິບແປດປີຂຶ້ນໄປ, ສິບຫ້າປີ ສຳລັບຜູ້ກະທຳຜິດທີ່ປະຕິບັດໂທດຕັດອິດສະລະພາບຕະຫລອດຊີວິດ.

ສານປະຊາຊົນທ້ອງຖິ່ນບ່ອນປະຕິບັດໂທດ ຈະເປັນຜູ້ພິຈາລະນາການປ່ອຍຕົວກ່ອນກຳນົດ ໂດຍມີເງື່ອນໄຂ ແລະ ວາງເງື່ອນໄຂໃຫ້ຜູ້ຖືກປ່ອຍຕົວປະຕິບັດ. ຖ້າວ່າພາຍໃນກຳນົດ ຫ້າປີ ຜູ້ຖືກປ່ອຍຕົວກ່ອນກຳນົດຫາກໄດ້ປະຕິບັດຖືກຕ້ອງຕາມເງື່ອນໄຂ ແລະ ບໍ່ໄດ້ກະທຳຜິດໃໝ່ ໂທດທີ່ເຫລືອນັ້ນ ກໍຈະຕົກໄປ.

ໃນກໍລະນີທີ່ບໍ່ປະຕິບັດໄດ້ຕາມເງື່ອນໄຂ ພາຍໃນກຳນົດດັ່ງກ່າວ ຜູ້ຖືກປ່ອຍຕົວກ່ອນກຳນົດຈະໄດ້ປະຕິບັດໂທດທີ່ຍັງເຫລືອນັ້ນ. ໃນກໍລະນີທີ່ໄດ້ກະທຳຜິດໃໝ່ ພາຍໃນກຳນົດດັ່ງກ່າວ ຜູ້ຖືກປ່ອຍຕົວກ່ອນກຳນົດ ຈະປະຕິບັດໂທດໃໝ່ລວມທັງໂທດເກົ່າທີ່ຍັງເຫລືອນັ້ນອີກດ້ວຍ.

ສຳລັບຜູ້ກະທຳຜິດທີ່ບໍ່ເຂັດຫລາບ ແລະ ຜູ້ຖືກລົງໂທດປະຫານຊີວິດແລ້ວປ່ຽນມາເປັນໂທດຕັດອິດສະລະພາບນັ້ນ ຫ້າມປ່ອຍຕົວກ່ອນກຳນົດ.

## ໝວດທີ VIII
## ວ່າດ້ວຍມາດຕະການຂອງສານ ກ່ຽວກັບການສຶກສາອົບຮົມ ແລະ ການປິ່ນປົວ.

ມາດຕາ 48. ການນຳໃຊ້ມາດຕະການຂອງສານຕໍ່ເດັກ.

ຕໍ່ເດັກອາຍຸບໍ່ທັນເຖິງ ສິບຫ້າປີ ຫາກໄດ້ກະທຳຜິດທາງອາຍານັ້ນ ສານຈະນຳໃຊ້ມາດຕະການດັ່ງຕໍ່ລົງໄປນີ້:

1. ໃຫ້ໄປຂໍອະໄພນຳຜູ້ຖືກເສັຽຫາຍດ້ວຍວິທີການອັນເໝາະສົມ;
2. ປະກາດການກະທຳຜິດ;
3. ສົ່ງໃຫ້ຜູ້ປົກຄອງເດັກຕິດຕາມສຶກສາອົບຮົມ;
4. ສົ່ງໃຫ້ອຳນາດການປົກຄອງ ແລະ ອົງການຈັດຕັ້ງສັງຄົມຕິດຕາມສຶກສາອົບຮົມ.

ຕໍ່ເດັກທີ່ມີອາຍຸແຕ່ ສິບຫ້າປີ ຂຶ້ນໄປແຕ່ຕ່ຳກວ່າ ສິບແປດປີ ຫາກໄດ້ກະທຳຜິດທາງອາຍາໃນຖານ ລະຫຸໂທດ ແລະ ໂທສານຸໂທດນັ້ນ ສານຈະນຳໃຊ້ມາດຕະການທີ່ກ່າວມາເທິງນີ້ກໍໄດ້.

ສຳລັບການໃຊ້ແທນຄ່າເສັຽຫາຍ ແມ່ນໃຫ້ປະຕິບັດຕາມລະບຽບການຮັບຜິດຊອບທາງແພ່ງ.

**ມາດຕາ 49. ການນຳໃຊ້ມາດຕະການຂອງສານຕໍ່ຄົນເສັຽຈິດ.**

ຕໍ່ຜູ້ທີ່ໄດ້ກະທຳຜິດໃນເວລາເສັຽຈິດ ຫລື ໃນເວລາທີ່ມີສະຕິສົມບູນດີ ແຕ່ໄດ້ເກີດເປັນໂລກເສັຽຈິດກ່ອນສານຕັດສິນ ຫລື ເວລາປະຕິບັດໂທດຢູ່ນັ້ນ ສານອາດຈະນຳໃຊ້ມາດຕະການກ່ຽວກັບການປິ່ນປົວ ໂດຍສົ່ງໄປປິ່ນປົວທີ່ໂຮງໝໍໂລກຈິດ ຫລື ສະຖານທີ່ປິ່ນປົວສະເພາະ.

ພາຍຫລັງທີ່ໄດ້ປິ່ນປົວດີແລ້ວຕ້ອງນຳເອົາຜູ້ກະທຳຜິດມາດຳເນີນຄະດີ ຫລື ນຳມາປະຕິບັດໂທດ ຖ້າຫາກວ່າຍັງບໍ່ທັນໝົດອາຍຸຄວາມໃນການຮ້ອງຟ້ອງ ຫລື ອາຍຸຄວາມໃນການປະຕິບັດຄຳຕັດສິນ.

ກຳນົດເວລາຂອງການປິ່ນປົວ ໃຫ້ນັບເຂົາໃນກຳນົດເວລາຂອງການປະຕິບັດໂທດ.

**ມາດຕາ 50. ການນຳໃຊ້ມາດຕະການຂອງສານຕໍ່ຜູ້ຕິດເຫລົ້າ ຫລື ຢາເສບຕິດ**

ຕໍ່ຜູ້ຕິດເຫລົ້າ ຫລື ຢາເສບຕິດທີ່ໄດ້ກະທຳຜິດ ຊຶ່ງບໍ່ຖືກລົງໂທດຕັດອິດສະລະພາບນັ້ນ ສານອາດຈະນຳໃຊ້ມາດຕະການກ່ຽວກັບການປິ່ນປົວ ໂດຍສົ່ງເຂົ້າໂຮງໝໍ ຫລື ສະຖານທີ່ປິ່ນປົວສະເພາະ. ໃນກໍລະນີທີ່ມີໂທດຕັດອິດສະລະພາບ ສານຕ້ອງນຳໃຊ້ມາດຕະການກ່ຽວກັບການປິ່ນປົວໃນໄລຍະທີ່ປະຕິບັດໂທດນັ້ນ ແລະ ໃນ ເມື່ອພົ້ນໂທດແລ້ວ ແຕ່ການປິ່ນປົວຫາກບໍ່ທັນສິ້ນສຸດ ສານອາດຈະນຳໃຊ້ມາດຕະການກ່ຽວກັບການປິ່ນປົວຕໍ່ ໂດຍສົ່ງເຂົ້າໂຮງໝໍສຳລັບປິ່ນປົວຜູ້ຕິດເຫລົ້າ ຫລື ຢາເສບຕິດສະເພາະ ຫລື ມອບໃຫ້ອຳນາດການປົກຄອງ, ອົງການຈັດຕັ້ງສັງຄົມ ຫລື ອົງການຈັດຕັ້ງລວມໝູ່ສືບຕໍ່ສຶກສາອົບຮົມ ແລະ ປິ່ນປົວ.

ພາຍຫລັງທີ່ໄດ້ປິ່ນປົວດີແລ້ວ ຕ້ອງນຳເອົາຜູ້ກະທຳຜິດມາດຳເນີນຄະດີ ຫລື ນຳມາປະຕິບັດໂທດ ຖ້າຫາກວ່າຍັງບໍ່ທັນໝົດອາຍຸຄວາມໃນການຮ້ອງຟ້ອງ ຫລື ອາຍຸຄວາມໃນການປະຕິບັດຄຳຕັດສິນ.

ກຳນົດເວລາຂອງການປິ່ນປົວ ໃຫ້ນັບເຂົາໃນກຳນົດເວລາຂອງການປະຕິບັດໂທດ.

## ພາກສະເພາະ

## ໝວດທີ 1
## ວ່າດ້ວຍການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ມາດຕາ 51 . ການທໍລະຍົດຕໍ່ຊາດ.

ພົນລະເມືອງລາວ ຜູ້ທີ່ໄດ້ພົວພັນ ແລະ ຮ່ວມມືກັບຄົນຕ່າງປະເທດ ຫລື ອົງການຈັດຕັ້ງຕ່າງປະເທດ ໂດຍມີເຈດຕະນາເຄື່ອນໄຫວທຳລາຍຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ຜົນປະໂຫຍດອັນຍິ່ງໃຫຍ່ທາງດ້ານການເມືອງ, ປ້ອງກັນຊາດປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ ຂອງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

ພົນລະເມືອງລາວຜູ້ທີ່ຖືກຄົນຕ່າງປະເທດ ຫລື ອົງການຈັດຕັ້ງຕ່າງປະເທດມອບໝາຍໃຫ້ກະທຳຜິດ ແຕ່ໄດ້ສະໝັກໃຈລາຍງານເຫດການໃຫ້ເຈົ້າໜ້າທີ່ຮູ້ລ່ວງໜ້າ ແລະ ຍັງບໍ່ທັນໄດ້ລົງມືກະທຳຜິດນັ້ນຈະບໍ່ຖືກລົງໂທດ.

### ມາດຕາ 52. ການກະບົດ

ບຸກຄົນຜູ້ໃດທີ່ໄດ້ເຂົ້າຮ່ວມການເຄື່ອນໄຫວກໍ່ຄວາມວຸ້ນວາຍ ເພື່ອໂຄ່ນລົມອຳນາດການປົກຄອງ ຫລື ເພື່ອເຮັດໃຫ້ອຳນາດການປົກຄອງອ່ອນເພັຽ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 53 . ການເປັນນັກສືບສອດແນມ

ຄົນຕ່າງປະເທດ, ຄົນຕ່າງດ້າວ ຫລື ຄົນບໍ່ມີສັນຊາດຜູ້ໃດຫາກໄດ້ເກັບກຳຂ່າວ ຫລື ເອກະສານກ່ຽວກັບຄວາມລັບຂອງລັດ ຫລື ຄວາມລັບທາງລັດຖະການ ເພື່ອເຄື່ອນໄຫວກໍ່ຄວາມເສັຽຫາຍ ຫລື ມ້າງເພສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບແຕ່ ແປດປີ ຫາ ຊາວປີ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ..

ບຸກຄົນຜູ້ໃດຫາກໄດ້ເກັບກຳຂ່າວ ຫລື ເອກະສານກ່ຽວກັບຄວາມລັບຂອງລັດ ຫລື ຄວາມລັບທາງລັດຖະການສົ່ງໃຫ້ພວກກະບົດລາວ ທີ່ເຄື່ອນໄຫວມ້າງເພ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່.

ພົນລະເມືອງລາວຜູ້ໃດທີ່ໄດ້ເກັບກຳຂ່າວ ຫລື ເອກະສານກ່ຽວກັບຄວາມລັບຂອງລັດ ຫລື ຄວາມລັບ ທາງລັດຖະການ ສົ່ງໃຫ້ຄົນຕ່າງປະເທດ ຫລື ອົງການຈັດຕັ້ງຕ່າງປະເທດ ເພື່ອໃຊ້ເປັນຂໍ້ມູນກໍ່ຄວາມເສັຽຫາຍ ຫລື ມ້າງເພ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືວ່າໄດ້ກະທຳຜິດໃນສະຖານທໍລະຍົດຕໍ່ຊາດ ແລະ ຈະຖືກລົງໂທດຕາມມາດຕາ 51 ຂອງກົດໝາຍສະບັບນີ້.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 54. ການລ່ວງລະເມີດດິນແດນ ຊຶ່ງແຕະຕ້ອງເຖິງຄວາມສະຫງົບຂອງຊາດ

ບຸກຄົນຜູ້ໃດ ທີ່ຖືອາວຸດ ຫາກໄດ້ລ່ວງລະເມີດດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງເປັນການແຕະຕ້ອງເຖິງຄວາມສະຫງົບຂອງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 55. ການປອງຮ້າຍ**

ບຸກຄົນຜູ້ໃດຫາກໄດ້ທຳຮ້າຍຮ່າງກາຍຜູ້ນຳ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອແນໃສ່ທຳລາຍມ້າງເພອຳນາດແຫ່ງລັດ ຫລື ເຮັດໃຫ້ອຳນາດແຫ່ງລັດອ່ອນເພັ້ຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ.

ໃນກໍລະນີທີ່ການປອງຮ້າຍນັ້ນຫາກໄດ້ເຮັດໃຫ້ເຖິງແກ່ຄວາມຕາຍ ຈະຖືກລົງໂທດຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ບຸກຄົນຜູ້ໃດຫາກໄດ້ທຳຮ້າຍຮ່າງກາຍຜູ້ຕາງໜ້າອຳນາດແຫ່ງລັດ, ພະນັກງານ, ບຸກຄົນທີ່ເຄື່ອນໄຫວວຽກງານຂອງອົງການ ຈັດຕັ້ງຂອງລັດ ຫລື ຂອງສັງຄົມ ເພື່ອແນໃສ່ເຮັດໃຫ້ອຳນາດແຫ່ງລັດອ່ອນເພັ້ຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາສິບປີ.

ໃນກໍລະນີທີ່ການປອງຮ້າຍນັ້ນຫາກໄດ້ເຮັດໃຫ້ເຖິງແກ່ຄວາມຕາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ຫລື ຕະຫລອດຊີວິດ ຫລື ປະຫານຊີວິດ.

ບຸກຄົນຜູ້ໃດຫາກໄດ້ທຳຮ້າຍຮ່າງກາຍ ຜູ້ຕາງໜ້າຂອງຕ່າງປະເທດ ເພື່ອແນໃສ່ແບ່ງແຍກ, ທຳລາຍສາຍພົວພັນລະຫວ່າງຊາດ ຫລື ກໍ່ໃຫ້ເກີດສົງຄາມຂຶ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ຊາວປີ.

ໃນກໍລະນີທີ່ການປອງຮ້າຍນັ້ນ ຫາກໄດ້ເຮັດໃຫ້ເຖິງແກ່ຄວາມຕາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ຫລື ຕະຫລອດຊີວິດ ຫລື ປະຫານຊີວິດ.

ນອກຈາກໂທດທີ່ກ່າວມາຂ້າງເທິງນີ້ແລ້ວ ຍັງອາດຈະຖືກຣິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 56. ການທຳລາຍມ້າງເພ**

ບຸກຄົນຜູ້ໃດຫາກໄດ້ທຳລາຍ, ມ້າງເພ, ຈູດເຜົາໂຮງຈັກໂຮງງານ, ສຳນັກງານ, ອົງການ, ເສັ້ນທາງ, ພາຫະນະຄົມມະນາຄົມຂົນສົ່ງ, ສື່ສານ ແລະ ພື້ນຖານເສດຖະກິດອື່ນໆທີ່ສຳຄັນ ເພື່ອແນໃສ່ເຮັດໃຫ້ລັດອ່ອນເພັ້ຍ ແລະ ເສດຖະກິດແຫ່ງຊາດຊຸດໂຊມ, ໄດ້ຫວ່ານຢາພິດເຄມີ ຫລື ປ່ອຍເຊື້ອພະຍາດໃສ່ໝູ່ຄົນ ຫລື ຝູງສັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ຊາວປີ, ອາດຈະຖືກຣິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມ ກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 57. ການທຳລາຍກິດຈະການຂອງລັດ ຫລື ຂອງສັງຄົມ**

ບຸກຄົນຜູ້ໃດຫາກໄດ້ເຄື່ອນໄຫວທຳລາຍກິດຈະການດ້ານ ອຸດສາຫະກຳ, ການຄ້າ, ຂົນສົ່ງ, ກະສິກຳ, ການເງິນ, ພື້ນຖານເສດຖະກິດ, ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງຂອງລັດ ແລະ ສັງຄົມດ້ວຍການກະທຳ ຫລື ການເມີນເສີຍ ຫລື ດ້ວຍການຍຸແຍ່ປັ່ນປ່ວນ ພາຍໃນໃຫ້ມີຄວາມແຕກແຍກ ໂດຍສວຍໃຊ້ໜ້າທີ່ຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ລັດອ່ອນເພັຽ ແລະ ເສດຖະກິດແຫ່ງຊາດຊຸດໂຊມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ, ອາດຈະຖືກຣິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມ ກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 58. ການປອມແປງເງິນ ຫລືການໃຊ້ເງິນປອມ**

ບຸກຄົນຜູ້ໃດຫາກໄດ້ໃຊ້ເຄື່ອງພິມ ຫລື ໃຊ້ວິທີການອື່ນປອມແປງເງິນທະນາຄານ, ເງິນຕາຕ່າງປະເທດ ຫລື ນຳເອົາເງິນປອມຈາກຕ່າງປະເທດເຂົາມາຈຳໜ່າຍຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ປອມແປງເງິນ ຫລື ໄດ້ນຳເອົາເງິນປອມເຂົາມາໂດຍມີການຈັດຕັ້ງ ຫລື ຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

ບຸກຄົນຜູ້ໃດຫາກຮູ້ວ່າແມ່ນເງິນປອມ ແຕ່ຍັງນຳອອກໃຊ້ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ.

ບຸກຄົນຜູ້ໃດຫາກຮູ້ວ່າຕົນມີເງິນປອມຢູ່ໃນຄອບຄອງ ແຕ່ບໍ່ໄດ້ແຈ້ງຕໍ່ເຈາໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງ ປີ.

**ມາດຕາ 59. ການໂຄສະນາຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ບຸກຄົນຜູ້ໃດຫາກໄດ້ໂຄສະນາໃສ່ຮ້າຍປ້າຍສີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບິດເບືອນແນວທາງຂອງພັກ ແລະ ນະໂຍບາຍຂອງລັດ, ປ່າວຂ່າວ ອະກຸສົນເຮັດໃຫ້ມີຄວາມວຸ້ນວາຍດ້ວຍການເວາ, ການຂຽນ, ການພິມ, ໜັງສືພິມ, ຮູບເງົາ, ວີດີໂອ, ຮູບພາບ, ເອກະສານ ຫລື ດ້ວຍຮູບການອື່ນໆ ທີ່ມີເນື້ອໃນຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ອຳນາດແຫ່ງລັດອ່ອນເພັຽ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

**ມາດຕາ 60 . ການແບ່ງແຍກຄວາມສາມັກຄີ**

ບຸກຄົນຜູ້ໃດຫາກໄດ້ກໍ່ຄວາມແບ່ງແຍກ ຫລື ກໍ່ຄວາມອາຄາດບາດໝາງ ລະຫວ່າງເຜົ່າຊົນ, ຊັ້ນຄົນເພື່ອທຳລາຍຄວາມສາມັກຄີປວງຊົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

**ມາດຕາ 61. ການໂຈລະກຳ**

ບຸກຄົນຜູ້ໃດຫາກໄດ້ເຂົາໃນການຈັດຕັ້ງເປັນກຸ່ມປະກອບອາວຸດແລ້ວໂຈມຕີ, ທຳລາຍໂຮງຈັກໂຮງງານ, ສຳນັກງານ, ອົງການຈັດຕັ້ງສັງຄົມ ຫລື ຈັບ ຫລື ຂ້າພະນັກງານ, ປະຊາຊົນ ຫລື ປຸ້ນເອົາຊັບສົມບັດຂອງລັດ, ຂອງລວມໝູ່, ຂອງບຸກຄົນ ເພື່ອທຳລາຍພື້ນຖານຄວາມເປັນລະບຽບຂອງສັງຄົມ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ຊາວປີ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 62. ການທຳລາຍມ້າງເພ ຫລື ການບຸກລຸກຄ້າຍຄຸມຂັງ, ຄ້າຍດັດສ້າງ**

ບຸກຄົນຜູ້ໃດຫາກໄດ້ໃຊ້ກຳລັງທຳລາຍມ້າງເພ ຫລື ບຸກລຸກຄ້າຍຄຸມຂັງ, ຄ້າຍດັດສ້າງ ເພື່ອປຸ້ນເອົາຫລື ຍາດເອົາ ຫລື ປ່ອຍຕົວຜູ້ຖືກຫາ, ນັກໂທດໃນຄ້າຍຄຸມຂັງ, ຄ້າຍດັດສ້າງ ຫລື ໃຊ້ກຳລັງປຸ້ນເອົາຜູ້ຖືກຫາ ຫລື ນັກໂທດໃນເວລາໂຍກຍ້າຍໄປມາ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ຊາວປີ, ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ບຸກຄົນຜູ້ໃດຫາກໄດ້ກໍ່ຄວາມປັ່ນປ່ວນ, ທຳລາຍລະບຽບພາຍໃນຂອງຄ້າຍຄຸມຂັງ, ຄ້າຍດັດສ້າງ ຫລື ຊັກຊວນຍຸແຍ່ໃຫ້ຜູ້ຖືກຫາ, ນັກໂທດໂຕນໜີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 63. ການໂຕນໜີໄປຫາສັດຕູ, ການລ້ຽງດູບຸກຄົນທີ່ເຄື່ອນໄຫວຕ້ານການປະຕິວັດ**

ບຸກຄົນຜູ້ໃດຫາກໄດ້ໂຕນໜີໄປຮ່ວມມືກັບສັດຕູ ເພື່ອຕ້ານການປະຕິວັດຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ສິບປີ.

ບຸກຄົນຜູ້ໃດຫາກໄດ້ປິດບັງ, ຊຸກເຊື່ອງ, ລ້ຽງດູ ຫລື ຊ່ວຍເຫລືອບຸກຄົນທີ່ເຄື່ອນໄຫວຕ້ານການປະຕິວັດ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

**ມາດຕາ 64. ການກະທຳຜິດຕໍ່ປະເທດເພື່ອນມິດ**

ບຸກຄົນຜູ້ໃດຫາກໄດ້ກະທຳຜິດຕໍ່ປະເທດເພື່ອນມິດດ້ວຍການກະທຳຜິດຕ່າງໆ ທີ່ໄດ້ກຳນົດໄວ້ໃນມາດຕາ 51 ຫາ ມາດຕາ 63 ຂອງກົດໝາຍອາຍາສະບັບນີ້ ກໍຈະຖືກລົງໂທດເໝືອນກັນກັບການກະທຳຜິດຕໍ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 65. ການເປີດເຜີຍຄວາມລັບຂອງລັດ ຫລື ຄວາມລັບທາງລັດຖະການ**

ບຸກຄົນຜູ້ໃດທີ່ມີໜ້າທີ່ຮັບຜິດຊອບໃນການເກັບມ້ຽນ, ຮັກສາ, ນຳໃຊ້ເອກະສານກ່ຽວກັບຄວາມລັບຂອງລັດ ໄດ້ເປີດເຜີຍຄວາມລັບ ຫລື ເຮັດໃຫ້ເສັຽຄວາມລັບ ຫລື ເຮັດໃຫ້ເອກະສານລັບດັ່ງ ກ່າວເສັຽຫາຍຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ.

ຖ້າແມ່ນຄວາມລັບທາງລັດຖະການ ກໍຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ສາມປີ.

**ມາດຕາ 66. ການເຕົ້າໂຮມກຸ່ມ ຄົນເພື່ອສ້າງຄວາມປັ່ນປ່ວນ**

ບຸກຄົນຜູ້ໃດຫາກໄດ້ຈັດຕັ້ງ ຫລື ເຂົ້າຮ່ວມໃນການຈັດຕັ້ງເຕົ້າໂຮມກຸ່ມຄົນ ເພື່ອທຳການປະທ້ວງ, ເດີນຂະບວນ ແລະ ອື່ນໆ ເພື່ອສ້າງຄວາມປັ່ນປ່ວນ ຊຶ່ງໄດ້ກໍ່ຄວາມເສັຽຫາຍແກ່ສັງຄົມ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

**ມາດຕາ 67. ການທຳລາຍ, ການເຄື່ອນຍ້າຍຫລັກໝາຍຊາຍແດນ**

ບຸກຄົນຜູ້ໃດຫາກໄດ້ທຳລາຍ ຫລື ໄດ້ເຮັດໃຫ້ຫລັກໝາຍຊາຍແດນເປ່ເພໂດຍເຈດຕະນາ ຫລື ໄດ້ເຄື່ອນຍ້າຍຫລັກໝາຍຊາຍແດນໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ຫລືປັບໃໝ ແຕ່ 5.000ກີບ ຫາ 30.000ກີບ.

**ມາດຕາ 68. ການທຳລາຍ, ການໝິ່ນປະໝາດເຄື່ອງໝາຍປະເທດ ຫລື ທຸງຊາດ**

ບຸກຄົນຜູ້ໃດຫາກໄດ້ທຳລາຍ, ໝິ່ນປະໝາດເຄື່ອງໝາຍປະເທດ ຫລື ທຸງຊາດທີ່ເປັນການແຕະຕ້ອງເຖິງກຽດ ແລະ ສັກສີຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ຫລື ປັບໃໝແຕ່ 5.000 ກີບ ຫາ 20.000 ກີບ.

**ມາດຕາ 69. ການຂົນຂວາຍສົ່ງຄົນອອກ ຫລື ການເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ໂຄສະນາຊວນເຊື່ອຕົວະຍົວະຫລອກລວງ ໃຫ້ຄົນໂຕນໜີໄປຕ່າງປະເທດ, ສົ່ງຄົນອອກ ຫລື ເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ.

**ມາດຕາ 70. ການຜະລິດ, ການມີໄວ້ໃນຄອບຄອງ ແລະ ການໃຊ້ອາວຸດເສິກ ຫລື ວັດຖຸລະເບີດໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ຜະລິດ, ມີໄວ້ໃນຄອບຄອງ, ຮັກສາ, ຖື ຫລື ໃຊ້ອາວຸດເສິກ ຫລື ວັດຖຸລະເບີດໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ຫ້າປີ.

**ມາດຕາ 71. ການຊື້ຂາຍອາວຸດເສິກ ຫລື ວັດຖຸລະເບີດ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ຊື້, ຂາຍອາວຸດເສິກ ຫລື ວັດຖຸລະເບີດໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ຫ້າປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຖືເອົາການຊື້, ການຂາຍອາວຸດເສິກ ຫລື ວັດຖຸລະເບີດເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ໄດ້ຊື້, ຂາຍວັດຖຸດັ່ງກ່າວເປັນຈຳນວນຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ.

**ມາດຕາ 72. ການລັກ, ການຍັກຍອກ, ການປຸ້ນເອົາອາວຸດເສິກ ຫລື ວັດຖຸລະເບີດ**

ບຸກຄົນຜູ້ໃດຫາກໄດ້ລັກ, ຍັກຍອກ, ປຸ້ນເອົາອາວຸດເສິກ ຫລື ວັດຖຸລະເບີດຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຖືເອົາການລັກ, ຍັກຍອກອາວຸດເສິກ ຫລື ວັດຖຸລະເບີດເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫລື ໄດ້ລັກ, ຍັກຍອກເອົາອາວຸດດັ່ງກ່າວເປັນຈຳນວນຫລວງຫລາຍ ຫລື ໄດ້ປຸ້ນເອົາອາວຸດດັ່ງກ່າວ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ.

**ມາດຕາ 73. ການເຮັດໃຫ້ອາວຸດເສິກ ຫລື ວັດຖຸລະເບີດຂອງລັດ ຫລື ຂອງລວມໝູ່ເສັຍຫາຍ**

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ອາວຸດເສິກ ຫລື ວັດຖຸລະເບີດຂອງລັດ ຫລື ຂອງລວມໝູ່ເສັຍຫາຍດ້ວຍຄວາມບໍ່ລະມັດລະວັງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 74. ການຜະລິດ, ການມີໄວ້ໃນຄອບຄອງເຄື່ອງວິທະຍຸສື່ສານ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ຜະລິດ, ມີໄວ້ຄອບຄອງ ຫລື ໄດ້ຕິດຕັ້ງເຄື່ອງວິທະຍຸສື່ສານ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ.

**ມາດຕາ 75. ການເປັນແພດເຖື່ອນ**

ບຸກຄົນຜູ້ໃດທີ່ບໍ່ໄດ້ຮັບອະນຸຍາດປິ່ນປົວຢ່າງເປັນທາງການ ຫາກໄດ້ປິ່ນປົວຄົນເຈັບ ເພື່ອຫາລາຍໄດ້ ຈະຖືກປັບໃໝແຕ່ 5.000 ກີບ ຫາ 50.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເຮັດໃຫ້ຄົນເສັຽອົງຄະ ຫລື ເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ຫ້າປີ.

**ມາດຕາ 76. ການຫລິ້ນການພະນັນທີ່ຕ້ອງຫ້າມ**

ບຸກຄົນຜູ້ໃດຫາກໄດ້ຫລິ້ນການພະນັນທີ່ຕ້ອງຫ້າມ ຈະຖືກປັບໃໝແຕ່ 5.000 ກີບ ຫາ 50.000 ກີບ.

ບຸກຄົນຜູ້ໃດຫາກໄດ້ສົມຍອມໃຫ້ຫລິ້ນການພະນັນທີ່ຕ້ອງຫ້າມຢູ່ໃນເຮືອນຂອງຕົນ ຫລື ເປັນເຈົ້າມື ຫລື ເປັນຜູ້ກະທຳຜິດທີ່ບໍ່ເຂັດຫລາບ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

### ມາດຕາ 77. ການເປັນນັກເລງອັນທະພານ

ບຸກຄົນຜູ້ໃດທີ່ບໍ່ເຄົາລົບນັບຖືລະບຽບວິໄນຂອງການດຳລົງຊີວິດຂອງສັງຄົມ ຫາກໄດ້ໃຊ້ຄວາມຮຸນແຮງ, ໃຊ້ການນາບຂູ່, ໃຊ້ຄວາມຫຽາບຊ້າ ຫລື ໄດ້ມີການກະທຳອື່ນໆ ຊຶ່ງຝືນຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກຕຳນິວິຈານຕໍ່ໜ້າມະຫາຊົນ ແລະ ຈະຖືກ ປັບໃໝແຕ່ 1.000 ກີບ ຫາ 5.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກເປັນຜູ້ກະທຳຜິດທີ່ບໍ່ເຂັດຫລາບ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ. ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

### ມາດຕາ 78. ການກະທຳຜິດຕໍ່ຄວາມປອດໄພຂອງການຈະລາຈອນ

ບຸກຄົນຜູ້ໃດໂດຍເຈດຕະນາ ຫາກໄດ້ເຮັດໃຫ້ຖະໜົນຫົນທາງເສັຽຫາຍ, ໄດ້ເອົາວັດຖຸສິ່ງຂອງກີດຂວາງຖະໜົນຫົນທາງ, ໄດ້ປ່ຽນແປງ ຫລື ເຮັດໃຫ້ປ້າຍຈະລາຈອນ ຫລື ປ້າຍສັນຍານ, ຫລັກໝາຍກິໂລແມັດເສັຽຫາຍ, ໄດ້ໃຊ້ຄວາມຮຸນແຮງ ຫລື ນາບຂູ່ຜູ້ຂັບຂີ່ຍານພາຫະນະ ຊຶ່ງພາໃຫ້ເກີດອຸບປະຕິເຫດໃນການຈະລາຈອນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ.

ໃນກໍລະນີທີ່ການກະທຳຜິດໄດ້ພາໃຫ້ມີຄົນບາດເຈັບສາຫັດ ຫລື ເສັຽອົງຄະຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ພາໃຫ້ມີຄົນເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກປີ ຫາ ສິບປີ.

ໃນກໍລະນີ ທີ່ເປັນການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ ຈະຖືກປັບໃໝແຕ່ 5.000 ກີບ ຫາ 15.000ກີບ.

ໃນກໍລະນີທີ່ເປັນການກະທຳຜິດ ດ້ວຍຄວາມບໍ່ລະມັດລະວັງ ແລ້ວພາໃຫ້ມີຄົນບາດເຈັບສາຫັດ, ເຈັບຫລາຍຄົນ ຫລື ເສັຽອົງຄະ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ເປັນການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ ແລ້ວພາໃຫ້ມີຄົນເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ເປັນການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ ແລ້ວພາໃຫ້ມີຄົນເສັຽຊີວິດເປັນຈຳນວນຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ແປດປີ.

### ມາດຕາ 79. ການລະເມີດກົດຈະລາຈອນ ທີ່ພາໃຫ້ເກີດອຸບປະຕິເຫດ

ບຸກຄົນຜູ້ໃດຫາກໄດ້ລະເມີດກົດຈະລາຈອນ ທີ່ພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ອື່ນຖືກບາດເຈັບ ຈະຖືກປັບໃໝແຕ່ 5.000 ກີບ ຫາ 15.000 ກີບ.

ໃນກໍລະນີທີ່ເປັນການກະທຳຜິດ ຊຶ່ງພາໃຫ້ມີຄົນບາດເຈັບສາຫັດ, ເຈັບຫລາຍຄົນ ຫລື ເສັຽອົງຄະ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ເປັນການກະທຳຜິດ ຊຶ່ງພາໃຫ້ມີຄົນເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ເປັນການກະທຳຜິດ ຊຶ່ງພາໃຫ້ມີຄົນເສັຽຊີວິດເປັນຈຳນວນຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ.

### ມາດຕາ 80 . ການຫລົບໜີຈາກອຸບປະຕິເຫດ

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ອຸບປະຕິເຫດເກີດຂຶ້ນແລ້ວຫລົບໜີ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ໝວດທີ II
## ວ່າດ້ວຍການກະທຳຜິດຕໍ່ຊີວິດ, ສຸກຂະພາບ
## ແລະ ກຽດສັກສີຂອງບຸກຄົນ.

### ມາດຕາ 81. ການຄາດຕະກຳ

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ຜູ້ອື່ນເສັຽຊີວິດໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ສິບຫ້າປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການຄາດຕະກຳເປັນອາຈິນ, ຂ້າຄົນໂດຍມີແຜນການ, ຂ້າຄົນຢ່າງໂຫດຮ້າຍປ່າເຖື່ອນ, ຂ້າພະນັກງານທີ່ກຳລັງປະຕິບັດໜ້າທີ່, ຂ້າຫລາຍຄົນ, ຂ້າຜູ້ຍິງຖືພາ, ຂ້າຄົນເພື່ອປິດບັງການກະທຳຜິດອື່ນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ຊາວປີ, ອາດຈະຖືກຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ໃນກໍລະນີ ທີ່ຜູ້ກະທຳຜິດຫາກໄດ້ເຮັດໃຫ້ຜູ້ອື່ນເສັຽຊີວິດໂດຍເຈດຕະນາ ຍ້ອນຖືກແຕະຕ້ອງດ້ານຈິດໃຈຢ່າງໜັກ ຈົນບໍ່ສາມາດຈະຄຸມສະຕິໄວ້ໄດ້ດ້ວຍການກະທຳອັນບໍ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກເຄາະຮ້າຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

### ມາດຕາ 82. ການທີ່ເຮັດໃຫ້ຜູ້ອື່ນເສັຽຊີວິດ ດ້ວຍຄວາມບໍ່ລະມັດລະວັງ

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ຜູ້ອື່ນເສັຽຊີວິດດ້ວຍຄວາມປະໝາດ, ຄວາມເລີ່ນເລີ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີຫາ ຫ້າປີ.

ໃນກໍລະນີ ທີ່ການກະທຳຜິດດັ່ງກ່າວຫາກໄດ້ເຮັດໃຫ້ຄົນເສັຽຊີວິດ ເປັນຈຳນວນຫລາຍ ຈະຖືກລົງໂທດ ຕັດອິດສະລະພາບແຕ່ຫ້າປີ ຫາ ສິບປີ.

**ມາດຕາ 83. ການທຳຮ້າຍຮ່າງກາຍ**

ບຸກຄົນຜູ້ໃດຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ.

ໃນກໍລະນີ ທີ່ມີການຫຸ້ມຕີ ຫລື ໃນກໍລະນີ ທີ່ການກະທຳຜິດດັ່ງກ່າວຫາກໄດ້ເຮັດໃຫ້ມີບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

ໃນກໍລະນີ ທີ່ການກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການເສັຽອົງຄະ ຫລື ເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

**ມາດຕາ 84. ການທີ່ເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ**

ບຸກຄົນຜູ້ໃດຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມປະໝາດ, ຄວາມເລິ່ນເລີ້ ຈະຖືກປັບໃໝແຕ່ 1.000 ກີບ ຫາ 5.000 ກີບ.

ໃນກໍລະນີທີ່ການກະທຳຜິດດັ່ງກ່າວຫາກໄດ້ເຮັດໃຫ້ມີບາດເຈັບສາຫັດ, ເຈັບຫລາຍຄົນ ຫລື ເສັຽອົງຄະ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ.

**ມາດຕາ 85. ການຫຼຸລູກໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ທຳການຫຼຸລູກໃຫ້ຜູ້ອື່ນຢ່າງຜິດກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີ ທີ່ຜູ້ກະທຳຜິດຫາກໄດ້ທຳການຫຼຸລູກໃຫ້ຜູ້ອື່ນເປັນອາຈິນ ຫລື ໃນກໍລະນີ ທີ່ການຫຼຸລູກໂດຍບໍ່ຖືກຕ້ອງຕາມກົດໝາຍນັ້ນຫາກເຮັດໃຫ້ສຸກຂະພາບຂອງແມ່ ຊຸດໂຊມ ຫລື ເຮັດໃຫ້ແມ່ເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ.

ຜູ້ຍິງຜູ້ໃດຫາກໄດ້ທຳການຫຼຸລູກດ້ວຍຕົນເອງ ຫລື ໃຊ້ຜູ້ອື່ນເຮັດໃຫ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 86. ການທີ່ບໍ່ໄດ້ໃຫ້ຄວາມຊ່ວຍເຫລືອແກ່ຜູ້ອື່ນ ໃນເວລາຕົກຢູ່ໃນໄພອັນຕະລາຍ**

ບຸກຄົນຜູ້ໃດຫາກໄດ້ພົບເຫັນຜູ້ອື່ນຕົກຢູ່ໃນໄພອັນຕະລາຍແກ່ຊີວິດ ຫລື ສຸກຂະພາບ ແຕ່ບໍ່ໄດ້ໃຫ້ຄວາມຊ່ວຍເຫລືອທັງໆທີ່ຕົນເອງກໍມີເງື່ອນໄຂພໍຊ່ວຍເຫລືອໄດ້ ຫລື ບອກຄົນອື່ນໃຫ້ຊ່ວຍເຫລືອຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ.

ບຸກຄົນຜູ້ໃດທີ່ມີໜ້າທີ່ຊ່ວຍເຫລືອ ແຕ່ ບໍ່ໄດ້ປະຕິບັດໜ້າທີ່ຂອງຕົນ ໃນການຊ່ວຍເຫລືອຜູ້ທີ່ຕົກຢູ່ໃນໄພອັນຕະລາຍແກ່ຊີວິດ ຫລື ສຸກຂະພາບ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ສາມປີ.

**ມາດຕາ 87. ການນິນທາ ແລະ ການໃສ່ຮ້າຍ**

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ຜູ້ອື່ນເສື່ອມເສັຽກຽດສັກສີຢ່າງຮ້າຍແຮງ ດ້ວຍການຂຽນ, ການເວົາ ຫລື ດ້ວຍຮູບການອື່ນໆ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫລື ປັບໃໝແຕ່ 5.000 ກີບ ຫາ 10.000 ກີບ.

ບຸກຄົນຜູ້ໃດຫາກໄດ້ໃສ່ຮ້າຍປ້າຍສີຜູ້ອື່ນ ໂດຍບໍ່ມີຄວາມຈິງ ດ້ວຍການຂຽນ, ການເວົາ ຫລື ດ້ວຍຮູບການອື່ນໆຊຶ່ງເຮັດໃຫ້ເສື່ອມເສັຽກຽດສັກສີຢ່າງຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫລື ປັບໃໝ ແຕ່ 5.000 ກີບ ຫາ 10.000 ກີບ.

**ມາດຕາ 88. ການປ້ອຍດ່າ**

ບຸກຄົນຜູ້ໃດຫາກໄດ້ໃຊ້ວາຈາ, ຂຽນ ຫລື ກະທຳແນວຫຍາບຊ້າໃສ່ຜູ້ອື່ນເພື່ອໃຫ້ເສື່ອມເສັຽກຽດສັກສີຢ່າງຮ້າຍແຮງຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫລື ປັບໃໝ ແຕ່ 5.000 ກີບ ຫາ 10.000 ກີບ.

**ມາດຕາ 89. ການໝິ່ນປະມາດຊາກສົບ ຫລື ຊື່ສຽງຂອງຜູ້ຕາຍ**

ບຸກຄົນຜູ້ໃດຫາກໄດ້ກະທຳ ຫລື ໃຊ້ວາຈາຢ່າງຫຍາບຊ້າ ຕໍ່ຊາກສົບ, ຊື່ສຽງ, ບ່ອນຝັງສົບ ຫລື ທາດຂອງຜູ້ຕາຍ ຊຶ່ງເປັນການແຕະຕ້ອງຈິດໃຈຂອງມະຫາຊົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງ ໂດຍບໍ່ຕັດອິດສະລະພາບ ຫລື ປັບໃໝແຕ່ 5.000 ກີບ ຫາ 10.000 ກີບ.

## ໝວດທີ III

## ວ່າດ້ວຍການກະທຳຜິດຕໍ່ສິດ ແລະ ເສລີພາບຂອງພົນລະເມືອງ.

**ມາດຕາ 90. ການບັງຄັບ**

ບຸກຄົນຜູ້ໃດຫາກໄດ້ບັງຄັບຜູ້ອື່ນ ດ້ວຍການໃຊ້ກຳລັງ ຫລື ອາວຸດ ຫລື ການນາບຂູ່ ເພື່ອໃຫ້ກະທຳ ຫລື ບໍ່ໃຫ້ກະທຳສິ່ງໃດສິ່ງໜຶ່ງ ທີ່ຕົນຕ້ອງການ ຊຶ່ງເປັນການຂັດກັບຈຸດປະສົງຂອງຜູ້ຖືກບັງຄັບ ແລະກໍ່ຄວາມເສັຽຫາຍແກ່ຜູ້ກ່ຽວນີ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ.

ໃນກໍລະນີ ທີ່ການບັງຄັບນັ້ນ ຫາກແມ່ນການຈີ້ລົດ ຫລື ກຳປັ່ນ ຫລື ຍົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ.

**ມາດຕາ 91. ການຈັບຕົວ , ການກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ.**

ບຸກຄົນຜູ້ໃດຫາກໄດ້ຈັບຕົວ ຫລື ໄດ້ກັກຂັງຜູ້ອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ເຮັດໃຫ້ສຸກຂະພາບ ຂອງຜູ້ຖືກຈັບຕົວ ຫລື ຜູ້ຖືກກັກຂັງຊຸດໂຊມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ການກະທຳຜິດນັ້ນ ຫາກໄດ້ເຮັດໃຫ້ຜູ້ຖືກຈັບຕົວ, ຜູ້ຖືກກັກຂັງເສັຽອົງຄະ ຫລື ເສັຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ.

**ມາດຕາ 92. ການຂາຍຄົນ ແລະ ການລັກພາຕົວ**

ບຸກຄົນຜູ້ໃດ ຫາກໄດ້ຂາຍຄົນ, ລັກເອົາຕົວຄົນໄປເພື່ອຮຽກຄ່າໄຖ່, ຂາຍ ຫລື ອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ.

**ມາດຕາ93. ການລ່ວງລະເມີດເສລີພາບຂອງບຸກຄົນ**

ບຸກຄົນຜູ້ໃດຫາກໄດ້ລ່ວງລະເມີດເສລີພາບຂອງບຸກຄົນ ໃນການປາກເວົາ, ການຂີດຂຽນ, ການໂຮມຊຸມນຸມ, ມິດຕິງ ແລະ ອື່ນໆ ທີ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 94. ການລ່ວງລະເມີດເຄຫະສະຖານ**

ບຸກຄົນຜູ້ໃດຫາກລ່ວງເຂົາເຄຫະສະຖານຜູ້ອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ດ້ວຍການໃຊ້ຄວາມຮຸນແຮງ, ການນາບຂູ່, ການໃຊ້ເອກະສານປອມ, ການປອມແປງເປັນເຈົາໜ້າທີ່ ຫລື ດ້ວຍວິທີການອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ຫລື ປັບໃໝ ແຕ່ 5.000 ກີບ ຫາ 20.000ກີບ.

**ມາດຕາ 95. ການລ່ວງລະເມີດຄວາມລັບສ່ວນຕົວ**

ບຸກຄົນຜູ້ໃດຫາກໄດ້ເຜີຍຄວາມລັບສ່ວນຕົວຂອງຜູ້ອື່ນທີ່ຕົນໄດ້ຮູ້ຈັກໃນເວລາປະຕິບັດວຽກງານວິຊາສະເພາະ ຫລື ໜ້າທີ່ ຊຶ່ງເປັນການກໍ່ຄວາມເສັຽຫາຍແກ່ຜູ້ອື່ນນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫົກ ເດືອນ ຫລື ປັບໃໝ ແຕ່ 5.000 ກີບ ຫາ 10.000ກີບ.

ບຸກຄົນຜູ້ໃດຫາກໄດ້ລັກເປີດຈົດໝາຍ, ໂທລະເລກ ຫລື ເອກະສານອື່ນໆ ຫລື ລັກຟັງໂທລະສັບຂອງຜູ້ອື່ນ ຊຶ່ງເປັນການກໍ່ຄວາມເສັຽຫາຍແກ່ຜູ້ອື່ນນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ຫົກເດືອນ ແລະ ຈະຖືກປັບໃໝ ແຕ່ 5.000 ກີບ ຫາ 10.000 ກີບ.

**ມາດຕາ 96. ການຂັດຂວາງສິດໃນການເລືອກຕັ້ງ ແລະ ການສະໝັກຮັບເລືອກຕັ້ງ**

ບຸກຄົນຜູ້ໃດ ຫາກໄດ້ຂັດຂວາງສິດໃນການເລືອກຕັ້ງ ຫລື ການຮັບສະໝັກເລືອກຕັ້ງຂອງພົນລະເມືອງ ເຂົາໃນສະພາແຫ່ງຊາດດ້ວຍການນາບຂູ່, ການຊື້ຈ້າງ ຫລື ການຕົວະຍົວະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ.

**ມາດຕາ 97. ການປອມແປງ ຫລື ການທຳລາຍເອກະສານໃນການເລືອກຕັ້ງ**

ບຸກຄົນຜູ້ໃດ ຫາກໄດ້ປອມແປງ ຫລື ທຳລາຍເອກະສານໃນການເລືອກຕັ້ງ, ໄດ້ປອມແປງ ຫລື ທຳລາຍຄະແນນສຽງ ຫລື ຜົນຂອງການເລືອກຕັ້ງ ເຂົາໃນສະພາແຫ່ງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງ ປີ ຫາ ສອງ ປີ.

## ໝວດທີ IV
## ວ່າດ້ວຍການກະທຳຜິດຕໍ່ກຳມະສິດຂອງລັດ ຫລື ລວມໝູ່

**ມາດຕາ 98. ການປຸ້ນຊັບຂອງລັດ ຫລື ລວມໝູ່**

ບຸກຄົນຜູ້ໃດຫາກໄດ້ໃຊ້ຄວາມຮຸນແຮງບຸກລຸກ ຫລື ໄດ້ໃຊ້ການນາບຂູ່ໂດຍກົງຕໍ່ຊີວິດ ຫລື ສຸກຂະພາບຂອງຜູ້ອື່ນ ເພື່ອເອົາຊັບຂອງລັດ ຫລື ລວມໝູ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການປຸ້ນຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ເຮັດໃຫ້ຄົນອື່ນບາດເຈັບສາຫັດ ຫລື ເສັຽຊີວິດ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ, ອາດຈະຖືກຮິບຊັບ, ອາດຈະຈຳກັດທີ່ຢູ່ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 99. ການລັກ, ການຍາດຊິງຊັບຂອງລັດ ຫລື ລວມໝູ່**

ບຸກຄົນຜູ້ໃດ ຫາກໄດ້ເອົາຊັບຂອງລັດ ຫລື ລວມໝູ່ມາເປັນຂອງຕົນໂດຍລັບຫລັງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ບຸກຄົນຜູ້ໃດຫາກໄດ້ເອົາຊັບຂອງລັດ ຫລື ລວມໝູ່ມາເປັນຂອງຕົນດ້ວຍວິທີຍາດຊິງເອົາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ລັກດ້ວຍການງັດແງະ, ມ້າງເພຣວຣາວ, ປະຕູ, ຫີບ, ຕູ້ແລະອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການລັກ, ການຍາດຊິງຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫລືໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມປີ ຫາ ເຈັດປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 100. ການສໍ້ໂກງຊັບຂອງລັດ ຫລື ລວມໝູ່

ບຸກຄົນຜູ້ໃດຫາກໄດ້ໃຊ້ເລ່ລ່ຽມຕົວະຍົວະ ຫລອກລວງດ້ວຍ ວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ທີ່ມີໜ້າທີ່ຮັບຜິດຊອບຊັບຂອງລັດ ຫລື ລວມໝູ່ ຫລື ຜູ້ອື່ນ ເອົາຊັບດັ່ງກ່າວໃຫ້ຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການສໍ້ໂກງຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 101. ການຍັກຍອກຊັບຂອງລັດຫລືລວມໝູ່

ບຸກຄົນຜູ້ໃດຫາກໄດ້ສວຍໃຊ້ຄວາມເຊື່ອໃຈເພື່ອໂລບເອົາ, ຕັດຮອນເອົາ ຫລື ສັບປ່ຽນເອົາຊັບຂອງລັດ ຫລື ລວມໝູ່ທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ, ຂົນສົ່ງ, ກໍ່ສ້າງ, ສ້ອມແປງ ຫລື ເຮັດວຽກໃດວຽກໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການຍັກຍອກຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດ ປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## ມາດຕາ 102. ການທຳລາຍ ຫລື ການເຮັດໃຫ້ຊັບຂອງລັດ ຫລື ລວມໝູ່ເປ່ເພໂດຍເຈດຕະນາ

ບຸກຄົນຜູ້ໃດຫາກໄດ້ທຳລາຍ ຫລື ເຮັດໃຫ້ຊັບຂອງລັດ ຫລື ລວມໝູ່ເປ່ເພໂດຍເຈດຕະນາດ້ວຍວິທີ ຫລື ຮູບການໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ຫລື ປັບໃໝແຕ່ 10.000 ກີບ ຫາ 30.000 ກີບ.

ໃນກໍລະນີທີ່ມີການເສັຽຫາຍຢ່າງຫລວງຫລາຍ, ເປັນອັນຕະລາຍຕໍ່ຊີວິດ ແລະ ສຸກຂະພາບຂອງປະຊາຊົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 103. ການທຳລາຍວັດຖຸບູຮານ ຫລື ສິ່ງກໍ່ສ້າງແຫ່ງສິນລະປະວັນນະກຳ**

ບຸກຄົນຜູ້ໃດຫາກໄດ້ທຳລາຍວັດຖຸບູຮານ ຫລື ສິ່ງກໍ່ສ້າງແຫ່ງສິນລະປະວັນນະກຳ ຊຶ່ງເປັນຂອງສ່ວນລວມ ຫລື ຂອງສ່ວນຕົວ ຫລື ໄດ້ນຳເອົາສິ່ງດັ່ງກ່າວອອກໄປຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ຫລື ຈະຖືກປັບໃໝຕາມລະບຽບການ ກ່ຽວກັບການປົກປັກຮັກສາບູຮານວັດຖຸ.

ບຸກຄົນຜູ້ໃດຫາກໄດ້ທຳລາຍ, ມ້າງເພພະທາດເຈດີ, ສະຖານທີ່ ແລະ ເຄື່ອງສັກກາລະບູຊາອື່ນໆ ຫລື ໄດ້ຂຸດຄົ້ນເອົາ ບີສິມ ຫລື ໄດ້ນຳເອົາພະພຸດທະຮູບ ຫລື ເຄື່ອງສັກກາລະບູຊາອື່ນໆ ໄປທຳລາຍ ຫລື ຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

**ມາດຕາ 104. ການເຮັດໃຫ້ຊັບຂອງລັດ ຫລື ລວມໝູ່ເສັຽຫາຍ ດ້ວຍຄວາມບໍ່ລະມັດລະວັງ.**

ບຸກຄົນຜູ້ໃດດ້ວຍຄວາມປະໝາດ ຫລື ດ້ວຍຄວາມເລີ່ນເລີ້ ຫາກໄດ້ເຮັດໃຫ້ຊັບຂອງລັດ ຫລື ລວມໝູ່ເສັຽຫາຍຢ່າງຫລວງຫລາຍ ຫລື ເສັຽຫາຍບໍ່ຫລວງຫລາຍ ແຕ່ຫາກມີຜົນສະທ້ອນຕໍ່ສັງຄົມ ຫລື ຕໍ່ພື້ນຖານເສດຖະກິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 105. ການຂາດຄວາມຮັບຜິດຊອບຕໍ່ໜ້າທີ່ຄຸ້ມຄອງຊັບຂອງລັດ ຫລື ລວມໝູ່**

ບຸກຄົນຜູ້ໃດທີ່ມີໜ້າທີ່ຄຸ້ມຄອງຊັບຂອງລັດ ຫລື ລວມໝູ່ ໂດຍກົງຫາກໄດ້ຂາດຄວາມຮັບຜິດຊອບບໍ່ໄດ້ປະຕິບັດຕາມລະບຽບການຄຸ້ມຄອງ ຊຶ່ງພາໃຫ້ເກີດມີຄວາມເສັຽຫາຍຢ່າງຫລວງຫລາຍ ແກ່ຊັບຂອງລັດ ຫລື ລວມໝູ່ນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

**ມາດຕາ 106. ການຄອບຄອງຊັບຂອງລັດ ຫລື ລວມໝູ່ຢ່າງຜິດກົດໝາຍ**

ບຸກຄົນຜູ້ໃດໂດຍເຈດຕະນາ ຫາກໄດ້ຄອບຄອງຊັບຂອງລັດ ຫລື ລວມໝູ່ທີ່ຕົນຊອກໄດ້, ເກັບໄດ້, ຂຸດຄົ້ນໄດ້ ຫລື ທີ່ບຸກຄົນອື່ນໄດ້ຫລົງມອບແກ່ຕົນ ໂດຍບໍ່ແຈ້ງຕໍ່ເຈົາໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ.

ໃນກໍລະນີທີ່ຊັບຂອງລັດ ຫລື ລວມໝູ່ ນັ້ນ ຫາກມີມູນຄ່າສູງ ຫລື ເປັນຈຳນວນຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

**ມາດຕາ 107. ການຊຸກເຊື່ອງ, ການຊື້ຂາຍຊັບຂອງລັດ ຫລື ລວມໝູ່ ຢ່າງຜິດກົດໝາຍ**

ບຸກຄົນຜູ້ໃດຫາກຮູ້ວ່າຊັບຂອງລັດ ຫລື ລວມໝູ່ ທີ່ໄດ້ຈາກການປຸ້ນ, ການລັກ, ການຍາດຊີງ, ການສໍ້ໂກງ, ການຍັກຍອກ ຫລື ດ້ວຍວິທີອື່ນໆ ທີ່ຜິດກົດໝາຍ ແລ້ວຮັບເອົາ, ຊື້ເອົາ, ເກັບຮັກສາ, ຊຸກເຊື່ອງ ຫລື ນຳໄປຂາຍ ຈະ ຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການກະທຳຜິດໃນ ສະຖານດັ່ງກ່າວເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ.

**ມາດຕາ 108. ການສວຍໃຊ້ຊັບຂອງລັດ ຫລືລວມໝູ່**

ບຸກຄົນຜູ້ໃດຫາກໄດ້ສວຍໃຊ້ຊັບຂອງລັດ ຫລື ລວມໝູ່ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງໄດ້ກໍ່ຄວາມເສັຽຫາຍຢ່າງຫລວງຫລາຍແກ່ລັດ ຫລື ລວມໝູ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ.

## ໝວດທີ V

## ວ່າດ້ວຍການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງພົນລະເມືອງ.

**ມາດຕາ 109. ການປຸ້ນຊັບຂອງພົນລະເມືອງ**

ບຸກຄົນຜູ້ໃດຫາກໄດ້ໃຊ້ຄວາມຮຸນແຮງບຸກລຸກ ຫລື ໄດ້ໃຊ້ການນາບຂູ່ໂດຍກົງຕໍ່ຊີວິດ ຫລື ສຸກຂະພາບຂອງຜູ້ອື່ນ ເພື່ອເອົາຊັບມາເປັນຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສີ່ປີ ຫາແປດປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການປຸ້ນຊັບເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ, ເຮັດໃຫ້ຄົນອື່ນບາດເຈັບສາຫັດ ຫລື ເສັຽຊີວິດ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ແປດປີ ຫາ ສິບຫ້າປີ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

**ມາດຕາ 110. ການລັກ, ການຍາດຊິງຊັບຂອງພົນລະເມືອງ**

ບຸກຄົນຜູ້ໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍລັບຫລັງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ບຸກຄົນຜູ້ໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນ ດ້ວຍວິທີຍາດຊິງເອົາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ລັກດ້ວຍການງັດແງະ, ມ້າງເພຮວຮາວ, ປະຕູ,ຫີບ, ຕູ້ແລະອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການລັກ, ການຍາດຊິງຊັບເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 111. ການສໍ້ໂກງຊັບຂອງພົນລະເມືອງ**

ບຸກຄົນຜູ້ໃດຫາກໄດ້ໃຊ້ເລ່ຫລ່ຽມຕົວະຍົວະຫລອກລວງ ດ້ວຍວິທີໃດກໍ່ຕາມ ເພື່ອເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການສໍ້ໂກງຊັບເປັນອາຈີນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສອງປີ ຫາ ຫ້າປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 112. ການຍັກຍອກຊັບຂອງພົນລະເມືອງ**

ບຸກຄົນຜູ້ໃດຫາກໄດ້ສວຍໃຊ້ຄວາມເຊື່ອໃຈເພື່ອຫລັກໂລບເອົາ, ຕັດຮອນເອົາ ຫລື ສັບປ່ຽນເອົາຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫລື ເພື່ອຈຸດປະສົງໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການຍັກຍອກຊັບເປັນອາຈີນ,ມີການຈັດຕັ້ງເປັນກຸ່ມຫລື ໃນກໍລະນີທີ່ມີ ຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 113. ການທຳລາຍຊັບ ຫລື ການເຮັດໃຫ້ຊັບຂອງພົນລະເມືອງເປ່ເພໂດຍເຈດຕະນາ**

ບຸກຄົນຜູ້ໃດຫາກໄດ້ທຳລາຍ ຫລື ໄດ້ເຮັດໃຫ້ຊັບຂອງຜູ້ອື່ນເປ່ເພໂດຍເຈດຕະນາ ດ້ວຍວິທີ ຫລື ຮູບການໃດກໍ່ຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ຫລືປັບໃໝ ແຕ່ 5.000 ກີບ ຫາ 20.000 ກີບ.

ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ, ເປັນອັນຕະລາຍຕໍ່ຊີວິດ ແລະ ສຸກຂະພາບຂອງປະຊາຊົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ເຈັດປີ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

**ມາດຕາ 114. ການຄອບຄອງຊັບຂອງພົນລະເມືອງຢ່າງຜິດກົດໝາຍ**

ບຸກຄົນຜູ້ໃດໂດຍເຈດຕະນາຫາກໄດ້ຄອບຄອງຊັບຂອງຜູ້ອື່ນທີ່ຕົນຊອກໄດ້, ເກັບໄດ້, ຂຸດຄົນໄດ້ ຫລື ທີ່ບຸກຄົນອື່ນໄດ້ຫລົງມອບໃຫ້ແກ່ຕົນ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ.

ໃນກໍລະນີທີ່ຊັບເຫລົ່ານັ້ນຫາກມີມູນຄ່າສູງ ຫລື ເປັນຈຳນວນຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາສາມປີ.

**ມາດຕາ 115. ການຊຸກເຊື່ອງ, ການຊື້ຂາຍຊັບຂອງພົນລະເມືອງຢ່າງຜິດກົດໝາຍ**

ບຸກຄົນຜູ້ໃດຫາກຮູ້ວ່າຊັບທີ່ຜູ້ອື່ນໄດ້ມາຈາກການປຸ້ນ, ການລັກ, ການຍາດຊີງ, ການສໍ້ໂກງ, ການຍັກຍອກ ຫລື ດ້ວຍວິທີອື່ນທີ່ຜິດກົດໝາຍ ແລ້ວຮັບເອົາ, ຊື້ເອົາ, ເກັບຮັກສາ, ຊຸກເຊື່ອງ ຫລື ນຳໄປຂາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການກະທຳຜິດໃນສະຖານດັ່ງກ່າວເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫລື ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ.

**ມາດຕາ 116. ການທີ່ເຮັດໃຫ້ຊັບຂອງພົນລະເມືອງຖືກໄຟໄໝ້ຍ້ອນຄວາມບໍ່ລະມັດລະວັງ**

ບຸກຄົນຜູ້ໃດຍ້ອນຄວາມປະໝາດ, ຄວາມເລີ່ນເລີ້ ຫາກໄດ້ເຮັດໃຫ້ໄຟໄໝ້ເຮືອນ, ສາງເຄື່ອງ, ຫ້າງຮ້ານຂອງຜູ້ອື່ນ ຫລື ຜົນລະປູກຂອງຜູ້ອື່ນຖືກເສັຽຫາຍເປັນຈຳນວນຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ຫລື ຖືກດັດສ້າງໂດຍບໍ່ຕັດອິດສະລະພາບ.

## ໝວດທີ VI
## ວ່າດ້ວຍການກະທຳຜິດຕໍ່ສາຍຜົວເມັຽ, ຄອບຄົວ ແລະ ຮີດຄອງປະເພນີ.

**ມາດຕາ 117. ການທຳມິດສະຈານ**

ບຸກຄົນຜູ້ໃດທີ່ມີເມັຽ ຫລື ຜົວ ຫາກໄດ້ເສບສົມກັບຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ຄູ່ທຳມິດສະຈານກໍຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 118. ການທີ່ບໍ່ປະຕິບັດພັນທະໃນການລ້ຽງດູລູກ, ພໍ່, ແມ່ ຫລື ຜົວ ເມັຽ**

ບຸກຄົນຜູ້ໃດຫາກບໍ່ໄດ້ລ້ຽງດູລູກຂອງຕົນ ທີ່ຍັງບໍ່ທັນເຖິງກະສຽນອາຍຸ, ບໍ່ໄດ້ລ້ຽງດູພໍ່ແມ່ຂອງຕົນທີ່ຂາດເຂີນ, ບໍ່ລ້ຽງດູເມັຽ ຫລື ຜົວຂອງຕົນທີ່ເສັຽອົງຄະ ຫລື ປ່ວຍໄຂ້ ຕາມຄຳຕັດສິນຂອງສານ ຈະຖືກລົງໂທດຕຳນິວິຈານຕໍ່ໜ້າມະຫາຊົນ.

**ມາດຕາ 119. ການຂົ່ມຂືນທຳຊຳເລົາ**

ບຸກຄົນຜູ້ໃດຫາກໄດ້ໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫລົບ, ໃຊ້ສິ່ງມຶນເມົາ ຫລື ໃຊ້ວິທີອື່ນໆ ທີ່ເຮັດໃຫ້ຜູ້ຍິງຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ເພື່ອທຳຊຳເລົາ ດ້ວຍການຂືນໃຈຂອງຜູ້ຍິງທີ່ບໍ່ແມ່ນເມັຽຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຂົ່ມຂືນທຳຊຳເລົາຜູ້ຍິງທີ່ມີອາຍຸ ແຕ່ ສິບຫ້າປີ ຫາ ສິບແປດປີ, ທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ຫລື ໃນການປິ່ນປົວຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ.

ໃນກໍລະນີທີ່ຜູ້ກະທໍາຜິດຫາກໄດ້ຂົ່ມຂືນທໍາຊໍາເລົາ ດ້ວຍວິທີປ່ຽນຜຽນກັນ, ຂົ່ມຂືນທໍາຊໍາເລົາເດັກທີ່ມີອາຍຸຕໍ່າກ່ວາ ສິບຫ້າປີ, ໄດ້ທໍາຮ້າຍຮ່າງກາຍຜູ້ຍິງໃນເວລາຂົ່ມຂືນ ຫລື ເຮັດໃຫ້ຜູ້ຍິງພິການຕະຫລອດຊີວິດ ຫລື ເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ.

ໃນກໍລະນີທີ່ຜູ້ກະທໍາຜິດຫາກໄດ້ຂົ່ມຂືນທໍາຊໍາເລົາແລ້ວໄດ້ຂ້າຜູ້ຍິງນັ້ນຖິ້ມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ຫລື ຕັດອິດສະລະພາບຕະຫລອດຊີວິດ ຫລື ປະຫານຊີວິດ.

ຄວາມພະຍາຍາມກໍ່ການກະທໍາຜິດ ກໍຈະຖືກລົງໂທດ.

**ມາດຕາ 120. ການທໍາຊໍາເລົາເດັກ**

ບຸກຄົນຜູ້ໃດຫາກໄດ້ເສບສົມກັບເດັກຍິງ ຫລື ເດັກຊາຍທີ່ມີອາຍຸຕໍ່າກ່ວາ ສິບຫ້າປີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ .

**ມາດຕາ 121. ການທໍາຊໍາເລົາຂອງພິກຂຸ,ສາມະເນນ**

ພິກຂຸສາມະເນນອົງໃດຫາກໄດ້ເສບສົມກັບຜູ້ຍິງ ຫລື ຜູ້ຊາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ຜູ້ຍິງ ຫລື ຜູ້ຊາຍທີ່ໄດ້ສະໝັກໃຈເສບສົມກັບພິກຂຸ ຫລື ສາມະເນນ ຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 122. ການເປັນໂສເພນີ**

ບຸກຄົນຜູ້ໃດຫາກໄດ້ຫາກິນດ້ວຍການຂາຍປະເວນີໃຫ້ຜູ້ອື່ນເສບສົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ບຸກຄົນຜູ້ໃດຫາກໄດ້ໃຫ້ຄວາມຊ່ວຍເຫລືອ ຫລື ຄວາມສະດວກແກ່ການເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 123. ການຄ້າໂສເພນີ**

ບຸກຄົນຜູ້ໃດຫາກຫາລາຍໄດ້ດ້ວຍການຄ້າໂສເພນີ ຈະໃນຮູບການໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທໍາຜິດຫາກໄດ້ຖືເອົາການຄ້າໂສເພນີເປັນອາຊີບ ຫລື ເອົາຜູ້ຍິງທີ່ຍັງບໍ່ທັນເຖິງກະສຽນອາຍຸມາເປັນໂສເພນີ ຫລື ບັງຄັບຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ.

**ມາດຕາ 124. ການຮ່ວມປະເວນີກັບຍາດໃກ້ຊິດ**

ບຸກຄົນຜູ້ໃດຫາກໄດ້ເສບສົມກັບ ພໍ່ ຫລື ແມ່, ພໍ່ລ້ຽງ ຫລື ແມ່ລ້ຽງ, ພໍ່ນ້າ ຫລື ແມ່ນ້າ, ພໍ່ເຖົ້າ ຫລື ແມ່ເຖົ້າ, ປູ່ ຫລື ຍ່າ, ລູກຄີງ, ລູກລ້ຽງ, ລູກນ້າ, ຫລານສາຍຕັ້ງ ຫລື ກັບອ້າຍຄີງ, ເອື້ອຍຄີງ, ນ້ອງຄີງຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ.

ຜູ້ສົມຍອມໃຫ້ເສບສົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ .

**ມາດຕາ 125. ການທຳລາມົກ**

ບຸກຄົນຜູ້ໃດຫາກໄດ້ເສບສົມ ຫລື ໄດ້ເຜີຍອະໄວຍະວະເພດຂອງຕົນ ຕໍ່ໜ້າຊຸມຊົນ ຫລື ຢູ່ໃນສະຖານທີ່ສາທາລະນະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 126. ການທຳອະນາຈານ**

ນອກຈາກການກະທຳທີ່ໄດ້ບົ່ງໄວ້ໃນໃນມາດຕາ 119 ຂອງກົດໝາຍສະບັບນີ້ ບຸກຄົນຜູ້ໃດຫາກໄດ້ມີການກະທຳທີ່ແຕະຕ້ອງເຖິງຄວາມອາຍາຍທາງເພດຂອງບຸກຄົນອື່ນ ໂດຍຝືນໃຈຂອງຜູ້ນີ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 127. ການເຜີຍແຜ່ສິ່ງລາມົກ ແລະ ສິ່ງທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ**

ບຸກຄົນຜູ້ໃດຫາກໄດ້ຜະລິດ ຫລື ໄດ້ນຳເອົາໜັງສື, ຮູບ, ຟີມວິດີໂອ ແລະ ສິ່ງອື່ນໆທີ່ລາມົກ ຫລື ສິ່ງອື່ນໆທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ ອອກຈຳໜ່າຍ ຫລື ເຜີຍແຜ່ທາງກ້ວາງ ຫລື ທາງເລິກ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫລືປັບໃໝແຕ່ 5.000 ກີບ ຫາ 50.000ກີບ

**ໝວດທີ VII**

**ວ່າດ້ວຍການກະທຳຜິດຕໍ່ເສດຖະກິດ.**

**ມາດຕາ 128. ການທຳລາຍປ່າໄມ້**

ບຸກຄົນຜູ້ໃດຫາກໄດ້ຕັດໄມ້, ຖາງປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບປ່າໄມ້, ຈູດປ່າ ຫລື ທຳລາຍປ່າໄມ້ດ້ວຍວິທີການອື່ນໆ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝຕາມລະບຽບການກ່ຽວກັບປ່າໄມ້.

ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝຕາມລະບຽບການກ່ຽວກັບປ່າໄມ້.

**ມາດຕາ 129. ການທຳລາຍເຄື່ອງປູກ**

ບຸກຄົນຜູ້ໃດຫາກໄດ້ທຳລາຍເຄື່ອງປູກຂອງລັດ, ລວມໝູ່, ອົງການຈັດຕັ້ງສັງຄົມ ຫລື ພົນລະເມືອງ ຈະຖືກປັບໃໝແຕ່ 1.000 ກີບ ຫາ 5.000 ກີບ.

ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ.

**ມາດຕາ 130. ການລ່າເນື້ອໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ລ່າເນື້ອ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການລ່າເນື້ອ ເຊັ່ນ: ລ່າສັດທີ່ຫວງຫ້າມ, ລ່າເນື້ອໃນລະດູ ຫລື ໃນເຂດທີ່ຫວງຫ້າມ ຫລື ດ້ວຍເຄື່ອງມືທີ່ເກືອດຫ້າມ ແລະ ອື່ນໆ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝຕາມລະບຽບການກ່ຽວກັບການລ່າເນື້ອ.

**ມາດຕາ 131. ການຫາປາ ຫລື ສັດນ້ຳອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ຫາປາ ຫລື ສັດນ້ຳ ອື່ນໆໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການຫາປາ ເຊັ່ນ: ຫາປາດ້ວຍການໃຊ້ລະເບີດ, ຢາເບື່ອ, ທາດເຄມີ ຫລື ເຄື່ອງມືອື່ນໆທີ່ເກືອດຫ້າມຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝຕາມລະບຽບການກ່ຽວກັບການຫາປາ.

**ມາດຕາ 132. ການຂຸດຄົ້ນຊັບພະຍາກອນທຳມະຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ຂຸດຄົ້ນເອົາຊັບພະຍາກອນທຳມະຊາດ ເຊັ່ນ: ໂລຫະ, ແຮ່, ຫີນຕ່າງໆທີ່ມີຄຸນຄ່າ, ເຄື່ອງປ່າຂອງດົງໂດຍບໍ່ຖືກຕ້ອງຕາມກົດໝາຍຈະຖືກປັບໃໝແຕ່ 5.000 ກີບ ຫາ 50.000 ກີບ.

ໃນກໍລະນີທີ່ມີຄວາມເສັຽຫາຍຢ່າງຫລວງຫລາຍຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ .

**ມາດຕາ 133. ການຜະລິດ, ການຂາຍເຄື່ອງບໍລິໂພກ ຫລື ຢາປິ່ນປົວພະຍາດ ທີ່ເປັນອັນຕະລາຍຕໍ່ສຸກຂະພາບ**

ບຸກຄົນຜູ້ໃດດ້ວຍຄວາມບໍ່ລະມັດລະວັງ ຫາກໄດ້ຜະລິດ ຫລື ຂາຍເຄື່ອງດື່ມ, ຊີ້ນ, ປາ, ໝາກໄມ້, ຜັກ ຫລື ເຄື່ອງບໍລິໂພກອື່ນໆ ຫລື ຢາປິ່ນປົວພະຍາດທີ່ເສັຽຄຸນ ທີ່ເປັນອັນຕະລາຍຕໍ່ສຸກຂະພາບ ຈະຖືກປັບໃໝແຕ່ 5.000 ກີບ ຫາ 20.000 ກີບ.

ໃນກໍລະນີທີ່ການກະທຳນັ້ນຫາກເປັນການກະທຳຜິດ ໂດຍເຈດຕະນາຈະຖືກລົງໂທດຕັດອິດສະລະພາບແຕ່ສາມ ເດືອນຫາ ສາມປີ.

**ມາດຕາ 134. ການຂາຍສິນຄ້າທີ່ເກືອດຫ້າມ**

ບຸກຄົນຜູ້ໃດຫາກໄດ້ຂາຍສິນຄ້າ ທີ່ເກືອດຫ້າມຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝຕາມລະບຽບການຂອງພາສີ.

**ມາດຕາ 135. ການຜະລິດ, ຄ້າຂາຍ,ເສບ ຫລື ມີຢາເສບຕິດໄວ້ໃນຄອບຄອງ**

ບຸກຄົນຜູ້ໃດຫາກໄດ້ຄ້າຝິ່ນ, ເຮໂລອິນ, ຂາຍເຮໂລອິນ ຫລືຢາເສບຕິດອື່ນໆ ຫລືຂົນຢາເສບຕິດດັ່ງກ່າວ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການຂາຍຢາເສບຕິດເປັນອາຈິນ ຫລືມີການຈັດຕັ້ງເປັນກຸ່ມ ຫລືເປັນຈຳນວນຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ສິບປີ.

ບຸກຄົນຜູ້ໃດຫາກມີຢາເສບຕິດຢູ່ໃນຄອບຄອງເປັນຈຳນວນຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ.

**ມາດຕາ 136. ການສວຍໂອກາດຂຶ້ນລາຄາສິນຄ້າ**

ບຸກຄົນຜູ້ໃດຫາກໄດ້ສວຍໂອກາດຂຶ້ນລາຄາສິນຄ້າ ຫລື ໄດ້ຂາຍສິນຄ້າແພງເກີນຂອບເຂດໃນເວລາເກີດໄພແຫ້ງແລ້ງ, ໄພນ້ຳຖ້ວມ ຫລື ໃນເວລາທີ່ມີສະພາບການຫຍຸ້ງຍາກເກີດຂຶ້ນໃນທ້ອງຖິ່ນໃດທ້ອງຖິ່ນໜຶ່ງຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນຫາ ສອງປີ ຫລືປັບໃໝແຕ່ 5.000 ກີບ ຫາ 50.000ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 137. ການກັກຕຸນສິນຄ້າ**

ບຸກຄົນຜູ້ໃດຫາກໄດ້ກັກຕຸນ, ຊຸກເຊື່ອງສິນຄ້າໄວ້ໃນວິສາຫະກິດ, ບໍລິສັດ, ຫ້າງຮ້ານຂອງຕົນ ຫລື ຢູ່ບ່ອນອື່ນເພື່ອສ້າງຄວາມປັ່ນປ່ວນທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງ ປີ ຫາ ສີ່ປີ ແລະ ຈະຖືກປັບໃໝຕາມລະບຽບການຂອງພາສີ.

**ມາດຕາ 138. ການຂາຍສິນຄ້າຂອງລັດ ຫລື ລວມໝູ່ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດທີ່ມີໜ້າທີ່ຮັບຜິດຊອບໃນການຂາຍສິນຄ້າຢູ່ຮ້ານຄ້າຂອງລັດ ຫລື ລວມໝູ່ໄດ້ເອົາສິນຄ້າທີ່ຕົນຮັບຜິດຊອບນັ້ນອອກຂາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຍ້ອນຄວາມໂລບມາກໂລພາຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 139. ການປອມແປງຕາຊິງ ຫລື ການວັດແທກ**

ບຸກຄົນຜູ້ໃດຫາກໄດ້ຫລັກໂລບການຊັ່ງ, ການຜອງ, ການວັດແທກໃນເວລາຊື້ຂາຍ, ແລກປ່ຽນ ຫລື ໃຊ້ຊິງ,ເຄື່ອງຜອງ,ເຄື່ອງວັດແທກທີ່ດັດແປງ ຫລື ທີ່ບໍ່ໄດ້ມາດຕະຖານ ເພື່ອຫລັກໂລບເອົາສິນຄ້າ ຫລື ເງິນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ ຫລືປັບໃໝແຕ່ 5.000 ກີບ ຫາ 30.000ກີບ.

**ມາດຕາ 140. ການປອມແປງເຊັກ, ການໃຊ້ເຊັກ ຫລື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນຜູ້ໃດຫາກໄດ້ປອມແປງເຊັກ ຫລື ພັນທະບັດອື່ນ ເພື່ອແລກປ່ຽນເອົາເງິນຕາຈາກທະນາຄານ, ແລກປ່ຽນເອົາສິນຄ້າ ຫລື ນຳໃຊ້ ໃນຮູບການອື່ນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ຫລື ຈະຖືກປັບໃໝຕາມລະບຽບການຂອງທະນາຄານ.

ບຸກຄົນຜູ້ໃດຫາກໄດ້ໃຊ້ເຊັກທີ່ບໍ່ມີເງິນ, ໃຊ້ເຊັກເກີນຈຳນວນເງິນທີ່ຕົນໄດ້ຝາກຢູ່ທະນາຄານ ຫລື ຊື້ຂາຍ ແລະ ແລກປ່ຽນເຊັກໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ຫລື ຈະຖືກປັບໃໝຕາມລະບຽບການຂອງທະນາຄານ.

**ມາດຕາ 141. ການລະເມີດລະບຽບການກ່ຽວກັບລະບອບພາສີອາກອນຂອງລັດ**

ບຸກຄົນຜູ້ໃດຫາກໄດ້ລະເມີດລະບຽບການກ່ຽວກັບລະບອບພາສີອາກອນຂອງລັດ ເຊັ່ນ: ພາສີທີ່ດິນ, ພາສີຊັບພະຍາກອນ, ພາສີຂາອອກ-ຂາເຂົ້າ, ອາກອນພາຍໃນ ແລະ ຄ່າທຳນຽມຕ່າງໆ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝຕາມລະບຽບການກ່ຽວກັບລະບອບພາສີອາກອນຂອງລັດ.

## ໝວດທີ VIII
## ວ່າດ້ວຍການກະທຳຜິດຂອງພະນັກງານຕໍ່ໜ້າທີ່ຮັບຜິດຊອບ.

**ມາດຕາ 142. ການສວຍໃຊ້ອຳນາດ**

ພະນັກງານຜູ້ໃດຫາກອີງໃສ່ອຳນາດ, ຕຳແໜ່ງ, ໜ້າທີ່ຂອງຕົນໄດ້ຫາຜົນປະໂຫຍດສ່ວນຕົວຊຶ່ງເປັນການກໍ່ຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບແຕ່ສາມເດືອນ ຫາ ສອງປີ.

ໃນກໍລະນີທີ່ການສວຍໃຊ້ອຳນາດໄດ້ເຮັດໃຫ້ມີຄວາມເສັຍຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ.

**ມາດຕາ 143. ການໃຊ້ອຳນາດເກີນຂອບເຂດ**

ພະນັກງານຜູ້ໃດໂດຍເຈດຕະນາຫາກໄດ້ປະຕິບັດໜ້າທີ່ເກີນຂອບເຂດອຳນາດ ທີ່ລະບຽບກົດໝາຍໄດ້ກຳນົດໄວ້ຊຶ່ງກໍ່ຄວາມເສັຽຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ.

ໃນກໍລະນີທີ່ໄດ້ໃຊ້ອຳນາດເກີນຂອບເຂດດ້ວຍການໃຊ້ຄວາມຮຸນແຮງ, ໃຊ້ອາວຸດ, ດ້ວຍການທໍລະມານ, ດ້ວຍການໃຊ້ວາຈາ ຫລື ການກະທຳທີ່ຫຍາບຊ້າພາໃຫ້ເສື່ອມເສັຽກຽດ ແລະ ສັກສີຂອງຜູ້ຖືກເສັຽຫາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ.

**ມາດຕາ 144. ການປະລະໜ້າທີ່**

ພະນັກງານຜູ້ໃດ ຫາກໄດ້ປະລະໜ້າທີ່ວຽກງານຂອງຕົນ ໂດຍເຈດຕະນາຊຶ່ງເປັນການກໍ່ຄວາມເສັຽຫາຍແກ່ ການເຄື່ອນໄຫວວຽກງານຂອງລັດຫລືຂອງສັງຄົມຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 145. ຄວາມເລິ່ນເລີ້ໃນການປະຕິບັດໜ້າທີ່**

ພະນັກງານຜູ້ໃດຫາກບໍ່ປະຕິບັດໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ ຫລື ໄດ້ປະຕິບັດໜ້າທີ່ວຽກງານດັ່ງກ່າວ ໂດຍຂາດຄວາມເອົາໃຈໃສ່, ຂາດນ້ຳໃຈຮັບຜິດຊອບ ຊຶ່ງພາໃຫ້ເກີດຄວາມເສັຽຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 146. ການຮັບສິນບົນ ແລະ ການໃຫ້ສິນບົນ**

ພະນັກງານຜູ້ໃດຫາກໄດ້ທວງເອົາ, ຂໍເອົາ, ຮັບເອົາ ຫລື ຕົກລົງຮັບເອົາສິນບົນຈາກຜູ້ອື່ນດ້ວຍການໃຊ້ໜ້າທີ່ຕຳແໜ່ງຂອງຕົນ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ສາມປີ.

ຜູ້ໃຫ້ສິນບົນ ຫລື ຜູ້ຕົກລົງໃຫ້ສິນບົນແກ່ພະນັກງານ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ.

ໃນກໍລະນີທີ່ສິນບົນນັ້ນຫາກເປັນຈຳນວນຫລວງຫລາຍ ຜູ້ຮັບ ແລະ ຜູ້ໃຫ້ສິນບົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ.

ຜູ້ເປັນສື່ກາງໃນການຮັບສິນບົນ ແລະ ໃນການໃຫ້ສິນບົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສອງປີ.

ຜູ້ທີ່ໃຫ້ສິນບົນຍ້ອນຖືກບັງຄັບ, ຂົ່ມຂູ່ ແລະ ພາຍຫລັງທີ່ໄດ້ໃຫ້ສິນບົນແລ້ວຈິງໃຈໄປລາຍງານຕໍ່ເຈົ້າໜ້າທີ່ຈະບໍ່ຖືວ່າເປັນຜູ້ກະທຳຜິດໃນສະຖານໃຫ້ສິນບົນ.

## ໝວດທີ IX
## ວ່າດ້ວຍການກະທຳຜິດຕໍ່ລະບຽບການບໍລິຫານ ແລະ ການຍຸຕິທຳ.

**ມາດຕາ 147. ການຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່**

ບຸກຄົນຜູ້ໃດຫາກໄດ້ໃຊ້ການນາບຂູ່ ຫລື ໃຊ້ຄວາມຮຸນແຮງ ເພື່ອຂັດຂວາງເຈົ້າໜ້າທີ່ ຊຶ່ງປະຕິບັດວຽກງານຂອງລັດ ຫລື ສັງ ຄົມ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ຫລື ປັບໃໝແຕ່ 5.000 ກີບ ຫາ 20.000 ກີບ.

ໃນກໍລະນີທີ່ມີການໃຊ້ຄວາມຮຸນແຮງ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ໄດ້ຮັບບາດເຈັບ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ.

ໃນກໍລະນີທີ່ມີການໃຊ້ຄວາມຮຸນແຮງ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ເສັຽອົງຄະ ຫລື ເສັຽຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ຫ້າປີ ຫາ ຊາວປີ ຫລື ຕະຫລອດຊີວິດ ຫລື ປະຫານຊີວິດ.

**ມາດຕາ 148. ການໝິ່ນປະໝາດເຈົ້າໜ້າທີ່**

ບຸກຄົນຜູ້ໃດຫາກໄດ້ກະທຳ, ໃຊ້ວາຈາແນວຫຍາບຊ້າ ຫລື ໄດ້ຫາຄວາມບໍ່ຈິງໃສ່ເຈົ້າໜ້າທີ່ ເພື່ອເຮັດໃຫ້ເສັຽຊື່ສຽງ, ເສັຽກຽດ ຊຶ່ງເຮັດໃຫ້ຂາດຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ຫລືປັບໃໝແຕ່ 5.000 ກີບ ຫາ 20.000 ກີບ.

**ມາດຕາ 149. ການທຳລາຍ, ການຊຸກເຊື່ອງເອກະສານ, ຕາປະທັບ**

ບຸກຄົນຜູ້ໃດໂດຍເຈດຕະນາຫາກໄດ້ທຳລາຍ, ຊຸກເຊື່ອງເອກະສານທາງລັດຖະການ, ຕາປະທັບ, ເຮັດໃຫ້ເອກະສານທາງລັດຖະການ, ຕາປະທັບດັ່ງກ່າວເສັຽຫາຍ ຫລື ໃຊ້ການບໍ່ໄດ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ.

ໃນກໍລະນີທີ່ແມ່ນເອກະສານສຳຄັນ ຊຶ່ງພາໃຫ້ມີຜົນເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 150. ການປອມແປງເອກະສານ ຫລື ການໃຊ້ເອກະສານປອມ**

ບຸກຄົນຜູ້ໃດຫາກໄດ້ປອມແປງເອກະສານ, ລາຍເຊັນ, ຕາປະທັບ, ໄດ້ຕັດ ຫລື ເພີ່ມຂໍ້ຄວາມໃດ ຂໍ້ຄວາມໜຶ່ງໃນເອກະສານ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງປີ.

ບຸກຄົນຜູ້ໃດຫາກຮູ້ວ່າແມ່ນເອກະສານປອມ ແລ້ວຍັງນຳເອົາໄປໃຊ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສອງ ປີ.

ໃນກໍລະນີທີ່ການປອມແປງເອກະສານ ຫລື ການໃຊ້ເອກະສານປອມ ຫາກພາໃຫ້ມີຜົນເສັຽຫາຍຢ່າງຫລວງຫລາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ.

**ມາດຕາ 151. ການເຂົາບວດໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນຜູ້ໃດຫາກໄດ້ເຂົາບວດເປັນພິກຂຸ, ສາມະເນນໂດຍບໍ່ໄດ້ຮັບອະນຸຍາດຈາກອຳນາດການປົກຄອງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ.

ພະສົງທີ່ໄດ້ຮັບບວດໃຫ້ບຸກຄົນໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 152. ການຫາຄວາມບໍ່ຈິງໃສ່ຜູ້ອື່ນ**

ບຸກຄົນຜູ້ໃດໂດຍເຈດຕະນາ ເພື່ອປັກປຳທຳລາຍຜູ້ອື່ນໄດ້ແຈ້ງຄວາມບໍ່ຈິງ ຕໍ່ເຈາໜ້າທີ່ເພື່ອໃຫ້ດຳເນີນຄະດີ ຫລື ຈັບກຸມຜູ້ນັ້ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ.

**ມາດຕາ 153. ການໃຫ້ການເທັດ**

ພະຍານ, ຜູ້ຖືກເສັຽຫາຍ, ຜູ້ຊ່ຽວຊານ, ຜູ້ແປພາສາ ໂດຍເຈດຕະນາໄດ້ໃຫ້ການ, ໃຫ້ຄຳເຫັນ ຫລື ແປບໍ່ຖືກຕາມ ຄວາມຈິງຕໍ່ສານ ຫລື ຕໍ່ເຈາໜ້າທີ່ ເພື່ອຜົນປະໂຫຍດອັນໃດອັນໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ.

ບຸກຄົນຜູ້ໃດຫາກໄດ້ຕົກລົງວ່າຈະມອບເງິນ, ວັດຖຸສິ່ງຂອງ ຫລື ຈະທຳຜົນປະໂຫຍດອັນໃດອັນໜຶ່ງແກ່ບຸກຄົນທີ່ກ່າວມາເທິງນີ້ເພື່ອໃຫ້ການເທັດ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ.

**ມາດຕາ 154. ການປິດບັງການກະທຳຜິດ**

ບຸກຄົນຜູ້ໃດຫາກໄດ້ຮູ້ ຫລື ໄດ້ເຫັນການກະທຳຜິດຂອງຜູ້ອື່ນ ແລ້ວ ບໍ່ລາຍງານຕໍ່ເຈາໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 155. ການຊຸກເຊື່ອງຜູ້ກະທຳຜິດ**

ບຸກຄົນຜູ້ໃດໂດຍບໍ່ໄດ້ຕົກລົງ ໃຫ້ຄຳໝັ້ນສັນຍາກັບຜູ້ກະທຳຜິດໄວ້ກ່ອນແລ້ວ ຫາກໄດ້ຊຸກເຊື່ອງ ຫລື ໃຫ້ຄວາມຊ່ວຍເຫລືອແກ່ຜູ້ກະທຳຜິດ ເພື່ອໃຫ້ພົ້ນຈາກການຈັບກຸມ ຫລື ຈາກການດຳເນີນຄະດີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ຫ້າປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 156. ການທຳລາຍຫລັກຖານ**

ບຸກຄົນຜູ້ໃດໂດຍເຈດຕະນາ ໄດ້ລົບລ້າງຮ່ອງຮອຍ, ຊຸກເຊື່ອງເອກະສານ ຫລື ວັດຖຸສິ່ງຂອງ ຊຶ່ງເປັນຫລັກຖານຢັ້ງຢືນການກະທຳຜິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 157. ການຍັກຍອກຂອງກາງ**

ບຸກຄົນຜູ້ໃດທີ່ມີໜ້າທີ່ຮັບຜິດຊອບປົກປັກຮັກສາຊັບ ຫລື ວັດຖຸສິ່ງຂອງ ຊຶ່ງເປັນຂອງກາງນັ້ນ ຫາກໄດ້ຂາຍ, ຊຸກເຊື່ອງ, ເຈືອດຈຳ, ນຳໃຊ້, ສັບປ່ຽນ ຫລື ໄດ້ເຮັດໃຫ້ຂອງກາງເສັຽຫາຍ ຫລື ອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ.

**ມາດຕາ 158. ການໂຕນໜີຈາກຄ້າຍຄຸມຂັງ ຫລື ຄ້າຍດັດສ້າງ**

ບຸກຄົນຜູ້ໃດຫາກໄດ້ໂຕນໜີຈາກຄ້າຍຄຸມຂັງ ຫລື ຄ້າຍດັດສ້າງໃນເວລາດຳເນີນຄະດີ ຫລື ໃນເວລາປະຕິບັດໂທດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ໂຕນໜີຈາກຄ້າຍຄຸມຂັງ ຫລື ຄ້າຍດັດສ້າງ ໂດຍໃຊ້ຄວາມ ຮຸນແຮງຕໍ່ເຈາໜ້າທີ່ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ.

**ມາດຕາ 159. ການກໍ່ຄວາມວຸ້ນວາຍໃນຄ້າຍຄຸມຂັງ ຫລື ຄ້າຍດັດສ້າງ**

ບຸກຄົນຜູ້ໃດຫາກໄດ້ກໍ່ຄວາມປັ່ນປ່ວນ, ທຳລາຍລະບຽບພາຍໃນຂອງຄ້າຍຄຸມຂັງ ຫລື ຄ້າຍ ດັດສ້າງ ຈະຖືກ ລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ.

**ມາດຕາ 160. ການທຸບຕີທໍລະມານຜູ້ຖືກຫາ ຫລື ນັກໂທດ**

ບຸກຄົນຜູ້ໃດຫາກໄດ້ທຸບຕີທໍລະມານ, ໃຊ້ມາດຕະການ ຫລື ມີການກະທຳອື່ນໆ ທີ່ບໍ່ຖືກ ຕ້ອງຕາມກົດໝາຍຕໍ່ຜູ້ຖືກຫາ ຫລື ນັກໂທດໃນເວລາຈັບຕົວ, ໃນເວລາດຳເນີນຄະດີ ຫລື ໃນເວລາ ປະຕິບັດໂທດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສາມປີ ຫລື ດັດສ້າງໂດຍບໍ່ ຕັດອິດສະລະພາບ.

**ມາດຕາ 161. ການເຮັດໃຫ້ຜູ້ຖືກຫາ ຫລື ນັກໂທດໂຕນໜີ**

ບຸກຄົນຜູ້ໃດດ້ວຍຄວາມປະໝາດ, ຄວາມເລີ່ນເລີ້ ຫາກໄດ້ເຮັດໃຫ້ຜູ້ຖືກຫາ ຫລື ນັກໂທດ ໂຕນໜີໃນເວລາຮັກສາ, ປ້ອງກັນຫລື ໃນເວລາໂຍກຍ້າຍຜູ້ຖືກຫາ ຫລື ນັກໂທດ ຈະຖືກລົງໂທດຕັດ ອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເຮັດໃຫ້ຜູ້ຖືກຫາ ຫລືນັກໂທດໂຕນໜີໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 162. ການບໍ່ປະຕິບັດຄຳຕັດສິນ ຫລື ຄຳສັ່ງຂອງ ສານ**

ບຸກຄົນຜູ້ໃດຫາກບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລື ຄຳພິພາກສາ ຫລື ໝາຍຮຽກຂອງສານ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລືປັບໃໝແຕ່ 5.000 ກີບ ຫາ 10.000 ກີບ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

## ຊັບສິ່ງຂອງທີ່ບໍ່ໃຫ້ຮິບ

ຊັບສິ່ງຂອງທີ່ຈຳເປັນສຳລັບຜູ້ຖືກຕັດສິນ ແລະ ບຸກຄົນຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງຜູ້ຖືກຕັດສິນ ທີ່ຈະບໍ່ຖືກຮິບມີດັ່ງຕໍ່ລົງໄປນີ້:

1.ເຮືອນຢູ່ປະຈຳຂອງຜູ້ຖືກຕັດສິນແລະຄອບຄົວຂອງຜູ້ກ່ຽວ;

2. ງົວ, ຄວາຍ, ຊ້າງ, ມ້າ, ແບ້, ແກະ, ໝູ ຖ້າຫາກມີປະເພດລະໂຕ, ສັດລ້ຽງທີ່ມີປີກ ສຳລັບບຸກຄົນທີ່ຖືເອົາການປູກຝັງ ຫລື ການລ້ຽງສັດເປັນອາຊີບ;

3. ອາຫານສຳລັບລ້ຽງສັດ ຖ້າຫາກວ່າສັດນັ້ນບໍ່ຖືກຮິບ;

4. ແນວປູກ, ອຸບປະກອນການຜະລິດ ສຳລັບບຸກຄົນທີ່ຖືເອົາການປູກຝັງເປັນອາຊີບ;

5. ວັດຖຸສິ່ງຂອງທີ່ໃຊ້ເປັນປະຈຳຂອງຜູ້ຖືກຕັດສິນ ແລະ ຂອງຄົນຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງຜູ້ຖືກຕັດສິນ:

- ເຄື່ອງນຸ່ງ;
- ເຄື່ອງນອນ;
- ເຄື່ອງໃຊ້ສຳລັບຄົວກິນ;
- ເຄື່ອງເຮືອນ(ຕຽງ ແລະ ຕັ່ງນັ່ງສຳລັບແຕ່ລະຄົນ,ໂຕະ,ຕູ້ໃສ່ເຄື່ອງ ແລະ ຫີບ ສຳລັບຄອບຄົວ);
- ເຄື່ອງຫລິ້ນເດັກນ້ອຍທຸກປະເພດ;

6. ເຄື່ອງກິນ;

7. ວັດຖຸສິ່ງຂອງທີ່ຈຳເປັນໃນການປະກອບອາຊີບຂອງຜູ້ຖືກຕັດສິນເວັ້ນເສັຽແຕ່ ໃນກໍລະນີທີ່ສານໄດ້ຕັດສິນ ຫ້າມຜູ້ກ່ຽວປະກອບອາຊີບນັ້ນຕໍ່ໄປ ຫລື ວັດຖຸສິ່ງຂອງທີ່ຜູ້ຖືກຕັດສິນໃຊ້ປະກອບອາຊີບທີ່ບໍ່ຖືກຕ້ອງຕາມກົດໝາຍ.